ທະນາຄານການຄ້າຕ່າງປະເທດລາວ ມະຫາຊົນ
BANQUE POUR LE COMMERCE EXTERIEUR LAO PUBLIC



ບົດລາຍງານການເຄື່ອນໄຫວທຸລະກິດ

ສຳລັບໄລຍະສາມເດືອນຂອງໄຕມາດທີ 1 ປີ 2024

ທີ່ສິ້ນສຸດວັນທີ 31 ມີນາ 2024

I. ສະພາບລວມຂອງ ທຄຕລ

1. ວິໄສທັດ

ທຄຕລ ໄດ້ຮັບການປັບປຸງວິໄສທັດຂອງຕົນຄືນໃໝ່ ໃນແຜນຍຸດທະສາດໄລຍະຍາວ 2021 – 2025 ເພື່ອປະກອບເຂົ້າໃນການພັດທະນາວຽກງານຂອງຕົນໃຫ້ບັນລຸຕາມເປົ້າໝາຍ ແລະ ວັດຖຸປະສົງຄື: **"ເປັນທະນາຄານທີ່ເຂັ້ມແຂງ ທັນສະໄໝ ໄດ້ມາດຕະຖານສາກົນ"**.

2. ພາລະກິດ

ເພື່ອເຮັດໃຫ້ ທຄຕລ ກາຍເປັນທະນາຄານທີ່ເຂັ້ມແຂງ ທັນສະໄໝ ໄດ້ມາດຕະຖານສາກົນ ພາລະກິດຫຼັກທີ່ສຳຄັນຂອງ ທຄຕລ ທີ່ຈະຕ້ອງໄດ້ສຸມໃສ່ ແມ່ນການພັດທະນາປັບປຸງດ້ານການບໍລິການ ໃຫ້ແທດເໝາະກັບໄລຍະການປ່ຽນແປງໃໝ່, ສ້າງຄວາມເຂັ້ມແຂງໝັ້ນຄົງທາງດ້ານການເງິນ ແລະ ສອດຄ່ອງຕາມຫຼັກການບາເຊ ວ 2, ພັດທະນາລະບົບໄອທີ ແລະ ເທັກໂນໂລຊີທີ່ທັນສະໄໝ ເຂົ້າໃນລະບົບບໍລິການ, ພັດທະນາດ້ານລະບົບຂໍ້ມູນຂ່າວສານໃຫ້ຖືກຕ້ອງ, ຊັດເຈນ, ໂປ່ງໃສ, ວ່ອງໄວ ແລະ ຮັບປະກັນຄວາມປອດໄພໄດ້ມາດຕະຖານສາກົນ. ພ້ອມນັ້ນ, ກໍ່ເນັ້ນໃສ່ການພັດທະນາບຸກຄະລາກອນໃນແຕ່ລະດ້ານ ໃຫ້ມີຄວາມຊຳນິຊຳນານ, ເປັນມືອາຊີບດ້ານການບໍລິການທະນາຄານ ເພື່ອຮອງຮັບການປ່ຽນແປງ ແລະ ການພັດທະນາ ທຄຕລ, ພ້ອມທັງສ້າງຄວາມເພິ່ງພໍໃຈໃຫ້ກັບລູກຄ້າທີ່ມາໃຊ້ບໍລິການ ແລະ ສ້າງຜົນປະໂຫຍດສູງສຸດໃຫ້ແກ່ຜູ້ຖືຮຸ້ນ ທຄຕລ ແບບຍືນຍົງ.

❖ ແຜນງານ ແລະ ໂຄງການ 2024

ເພື່ອເຮັດໃຫ້ ທຄຕລ ໄດ້ພັດທະນາປັບປຸງ ແລະ ສ້າງຄວາມເຂັ້ມແຂງໝັ້ນຄົງຍືນຍົງ ກາຍເປັນທະນາຄານທີ່ນຳໜ້າໃນດ້ານຄວາມທັນສະໄໝ, ໄດ້ມາດຕະຖານສາກົນ ໃນລະບົບທະນາຄານ ໃນ ສປປ ລາວ. ທຄຕລ ໄດ້ກຳນົດຍຸດທະສາດການພັດທະນາ ເພື່ອກຳນົດບັນດາທິດທາງ, ຄາດໝາຍ ແລະ ແຜນການຈັດຕັ້ງປະຕິບັດລະອຽດ ເຊິ່ງແຜນງານ ແລະ ໂຄງການທີ່ຈັດຕັ້ງປະຕິບັດໃນປີ 2024 ປະກອບມີ 11 ແຜນງານ ແລະ 39 ໂຄງການ ດັ່ງລາຍລະອຽດລຸ່ມນີ້:

- **ຍຸດທະສາດທີ 1: ສ້າງຄວາມເຂັ້ມແຂງໃຫ້ອົງກອນຢ່າງຮອບດ້ານ** (ປະກອບມີ 5 ແຜນງານ ແລະ 20 ໂຄງການ)
  - ການບໍລິຫານການເງິນ ແລະ ເພີ່ມປະສິດທິພາບການດຳເນີນທຸລະກິດໃຫ້ຍືນຍົງ ປະກອບມີ 5 ໂຄງການ;
  - ການຄຸ້ມຄອງ ແລະ ບໍລິຫານສິນເຊື່ອ ປະກອບມີ 5 ໂຄງການ;
  - ການພັດທະນາບໍລິຫານບຸກຄະລາກອນ ໃຫ້ເຂັ້ມແຂງ ແລະ ມີປະສິທິພາບ ປະກອບມີ 4 ໂຄງການ;
  - ສ້າງລະບົບຄຸ້ມຄອງຄວາມສ່ຽງ ແລະ ສ້າງພື້ນຖານຕ້ານການຟອກເງິນໃຫ້ເຂັ້ມແຂງ ປະກອບມີ 5 ໂຄງການ;
  - ພັດທະນາການຄຸ້ມຄອງບໍລິຫານໃຫ້ໄດ້ມາດຖານສາກົນ ປະກອບມີ 1 ໂຄງການ.
- **ຍຸດທະສາດທີ 2: ຍຸດທະສາດທັນເປັນທັນສະໄໝ ໂດຍນຳໃຊ້ເຕັກໂນໂລຊີ ແລະ ນະວັດຕະກຳໃໝ່ໆໃນການດຳເນີນທຸລະກິດ ກ້າວສູ່ຍຸກເສດຖະກິດດິຈິຕອລ** (ປະກອບມີ 3 ແຜນງານ ແລະ 14 ໂຄງການ)
  - ການພັດທະນາ ແລະ ຄຸ້ມຄອງລະບົບໄອທີ ປະກອບມີ 7 ໂຄງການ;
  - ຄຸ້ມຄອງບໍລິຫານຂໍ້ມູນ ແລະ ການພັດທະນາວຽກງານສະຖິຕິ ໃຫ້ທັນສະໄໝໄດ້ມາດຕະຖານສາກົນ ແລະ ມີຄຸນນະພາບ ປະກອບມີ 5 ໂຄງການ;
  - ພັດທະນາຜະລິດຕະພັນ ເພື່ອກ້າວສູ່ການບໍລິການໃນຮູບແບບ Digital Banking ປະກອບມີ 2 ໂຄງການ;

- **ຍຸດທະສາດທີ 3: ຍຸດທະສາດສ້າງການຄຸ້ມຄອງ ແລະ ບໍລິການຕາມມາດຕະຖານສາກົນ** (ປະກອບມີ 3 ແຜນງານ ແລະ 5 ໂຄງການ)
  - ການປັບປຸງ, ພັດທະນາລະບົບບັນຊີ ແລະ ມາດຕະຖານການລາຍງານການເງິນ ປະກອບມີ 3 ໂຄງການ;
  - ພັດທະນາ ແລະ ປັບປຸງລະບົບກວດກາໃຫ້ເຂັ້ມແຂງໄດ້ມາດຕະຖານ ປະກອບມີ 2 ໂຄງການ;
  - ພັດທະນາໂຄງການ PCI Compliance ຫຼື Payment Card Industry Data Security Standard.

II. ຖານະການເງິນ ແລະ ຜົນດຳເນີນງານ

1. ເສດຖະກິດມະຫາພາກ ສປປ ລາວ ແລະ ທ່າອ່ຽງໃນຕໍ່ໜ້າ

ໃນປີ 2023, ລວມຍອດຜະລິດຕະພັນພາຍໃນ (GDP) ສປປ ລາວ ຂະຫຍາຍຕົວໃນລະດັບ 4.2% (ມະຕິສະພາໝົດປີໃຫ້ບັນລຸ 4.5%) ເຊິ່ງຫຼຸດຕາມການກຳນົດໄວ້ ປັດໄຈທີ່ເຮັດໃຫ້ການຂະຫຍາຍຕົວເສດຖະກິດບໍ່ບັນລຸຕາມເປົ້າໝາຍຍ້ອນເສດຖະກິດຂອງ ສ ປປ ລາວ ສືບຕໍ່ໄດ້ຮັບຜົນກະທົບຈາກເສດຖະກິດໂລກ ແລະ ພາກພື້ນ, ການອ່ອນຄ່າຂອງເງິນກີບ, ອັດຕາແລກປ່ຽນຍັງມີຄວາມບອບບາງຕໍ່ຜົນກະທົບຂອງການປ່ຽນແປງສະພາບເສດຖະກິດໂລກ ແລະ ຍ້ອນຄວາມຕ້ອງການເງິນຕາຕ່າງປະເທດໃນສັງຄົມຢູ່ພາຍໃນປະເທດ ຍັງສູງກວ່າຄວາມອາດສາມາດໃນການສະໜອງ ພ້ອມນັ້ນ, ກໍ່ຍັງມີພັນທະຊຳລະໜີ້ສິນຕໍ່ຕ່າງປະເທດໃນຈຳນວນຫຼາຍ. ໂດຍລວມແລ້ວ, ເສດຖະກິດ ສປປ ລາວ ໃນປີ 2023 ແມ່ນຢູ່ໃນໄລຍະສືບຕໍ່ຟື້ນຕົວທຽບໃສ່ປີທີ່ຜ່ານມາ. ປັດໄຈທີ່ຊຸກຍູ້ການເຕີບໂຕຂອງເສດຖະກິດປະກອບມີ ຂະແໜງກະສິກຳ ຂະຫຍາຍຕົວເພີ່ມຂຶ້ນ 3.7% (ລື່ນແຜນ 1.2%), ຂະແໜງອຸດສາຫະກຳ ຂະຫຍາຍຕົວ 3.1% (ຫຼຸດແຜນ 1.9%) ແລະ ຂະແໜງການບໍລິການ ຂະຫຍາຍຕົວ 5.6% (ລື່ນແຜນ 0.9%), ສາມາດສ້າງມູນຄ່າເພີ່ມລາຄາໃນປີ 265,475 ຕື້ກີບ ແລະ ລາຍໄດ້ສະເລ່ຍຕໍ່ຫົວຄົນເທົ່າກັບ 1,832 ໂດລາສະຫາລັດ.

ໃນປີ 2024, ສະພາບການຂອງໂລກຍັງມີທ່າອ່ຽງສືບຕໍ່ຜັນຜວນ ເປັນຕົ້ນແມ່ນຄວາມຂັດແຍ່ງທາງດ້ານການເມືອງ-ການທະຫານ, ການນຳໃຊ້ນະໂຍບາຍຂອງບັນດາປະເທດມະຫາອຳນາດ ທີ່ອາດຈະກະທົບເຖິງການໄຫຼວຽນຂອງເງິນທຶນ, ການປ່ຽນແປງນະໂຍບາຍຂອງປະເທດກຸ່ມຜູ້ຜະລິດ, ບັນຫາໄພທຳມະຊາດ ແລະ ພະຍາດລະບາດທີ່ຄາດເດົາໄດ້ຍາກ ເຊິ່ງເປັນສິ່ງທ້າທາຍໃຫ້ຫຼາຍປະເທດ. ອີງການ IMF ໄດ້ຄາດຄະເນເສດຖະກິດໂລກຈະຂະຫຍາຍຕົວຫຼຸດລົງຈາກ 3% ໃນປີ 2023 ມາເປັນ 2.9% ໃນປີ 2024. ສຳຫຼັບທ່າອ່ຽງເສດຖະກິດ ສປປ ລາວ ອີງຕາມລາຍງານຂອງ ADB ຄາດວ່າຈະມີການເຕີບໂຕໃນລະດັບປານກາງ 4%[1] ດ້ວຍແຮງສະໜັບສະໜູນຈາກພາຍນອກເຊັ່ນ: ການທ່ອງທ່ຽວ, ການລົງທຶນ ແລະ ການຄ້າ. ນອກນີ້, ຍັງຈະໄດ້ຮັບການລົງທຶນຈາກຕ່າງປະເທດຫຼາຍຂຶ້ນ ໂດຍສະເພາະໃນໂຄງການພະລັງງານຕ່າງໆ ເຊິ່ງຈະເປັນແຮງສະໜັບສະໜູນສຳຄັນໃນການຊຸກຍູ້ການຂະຫຍາຍຕົວຂອງອຸດສາຫະກຳຂອງ ສປປ ລາວ.

ເຖິງຢ່າງໃດກໍ່ຕາມ, ທ່າມກາງຄວາມກົດດັນຈາກສະພາບເງິນເຟີ້ເພີ່ມຂຶ້ນຢ່າງຕໍ່ເນື່ອງ, ພັນທະທີ່ຕ້ອງຊຳລະໜີ້ສິນໃຫ້ຕ່າງປະເທດ, ຂາດສະຖຽນລະພາບທາງດ້ານການເງິນ-ເງິນຕາ, ບັນຫາຂາດແຄນແຮງງານ, ຜົນກະທົບຈາກໄພທຳມະຊາດ ແລະ ຜົນກະທົບຂອງການແຜ່ລະບາດຂອງພະຍາດໃນໄລຍະທີ່ຜ່ານມາ ທີ່ໄດ້ສ້າງຜົນກະທົບເປັນວົງກວ້າງຕໍ່ຜູ້ປະກອບການ ແລະ ຕໍ່ເສດຖະກິດຂອງປະເທດ ສິ່ງດັ່ງກ່າວອາດເຮັດໃຫ້ຈັງຫວະການຟື້ນຕົວຂອງເສດຖະກິດໂດຍລວມຂອງປະເທດຫຼຸດລົງ.

1.1. ອັດຕາເງິນເຟີ້

ອັດຕາເງິນເຟີ້ໃນເດືອນ 03/2024 ຢູ່ໃນລະດັບ 24.9%[2] ໃນນັ້ນ, ໝວດສິນຄ້າທີ່ມີອັດຕາເງິນເຟີ້ເພີ່ມຂຶ້ນສູງແມ່ນ ໝວດເຄື່ອງນຸ່ງຫົ່ມ ແລະ ເກີບ ເພີ່ມຂຶ້ນ 36.2%; ໝວດຮ້ານອາຫານ ແລະ ໂຮງແຮງເພີ່ມຂຶ້ນ 35.9%; ໝ

[1] https://www.adb.org/news/lao-pdr-see-moderate-growth-2024-navigating-debt-and-inflation-adb

[2] ບົດລາຍງານສະພາບອັດຕາເງິນເຟີ້ ປະຈຳເດືອນມີນາ, 2024 ສູນສະຖິຕິແຫ່ງຊາດ

ວດຮັກສາສຸຂະພາບ ແລະ ຢາເພີ່ມຂຶ້ນ 34.6%; ໝວດເຫຼົ້າ ແລະ ຢາສູບ ເພີ່ມຂຶ້ນ 26.4%; ໝວດພັກອາໄສ, ໄຟຟ້າ ແລະ ນ້ຳປະປາ ເພີ່ມຂຶ້ນ 26.4%. ສຳລັບເງິນເຟີ້ໄຕມາດ 1/2024 ຢູ່ໃນລະດັບ 24.9% ໝວດທີ່ເພີ່ມຂຶ້ນສູງກວ່າໝູ່ ແມ່ນ ໝວດຮ້ານອາຫານ ແລະ ໂຮງແຮມ ເພີ່ມຂຶ້ນ 35.7%, ໃນນັ້ນ, ພື້ນເດັ່ນແມ່ນ ລາຄາອາຫານສຸກ; ຮອງລົງມາ ແມ່ນໝວດເຄື່ອງນຸ່ງຫົ່ມ ແລະ ເກີບ ເພີ່ມຂຶ້ນ 34.9%; ໝວດຮັກສາສຸຂະພາບ ແລະ ຢາ ເພີ່ມຂຶ້ນ 32.7% ພື້ນເດັ່ນ ແມ່ນລາຄາຢາ, ການບໍລິການຄົນເຈັບພາຍນອກ ແລະ ການບໍລິການຈາກໂຮງໝໍເອກະຊົນ.

ປັດໄຈເຮັດໃຫ້ອັດຕາເງິນເຟີ້ເພີ່ມຂຶ້ນມີທັງປັດໄຈພາຍນອກ ແລະ ປັດໄຈພາຍໃນ ເຊັ່ນ: ການອ່ອນຄ່າຂອງ ເງິນກີບທຽບໃສ່ເງິນຕາຕ່າງປະເທດ, ຖານການຜະລິດພາຍໃນບໍ່ເຂັ້ມແຂງ, ການເພີ່ມຂຶ້ນຂອງລາຄານ້ຳມັນ ແລະ ການຄຸ້ມຄອງລາຄາສິນຄ້າ ແລະ ບໍລິການພາຍໃນຍັງບໍ່ທັນໄດ້ດີເທົ່າທີ່ຄວນ.

1.2. ອັດຕາແລກປ່ຽນ

ອັດຕາແລກປ່ຽນລະບົບທະນາຄານ ສຳລັບເງິນໂດລາ ສະເລ່ຍ ໃນປີ 2023 ແມ່ນ 18,717 ກີບ/ໂດລາ ເພີ່ມ ຂຶ້ນເຖິງ 130.64% ທຽບປີຕໍ່ປີ (ຈາກ 14,327 ກີບ/ໂດລາ), ໃນຂະນະທີ່ອັດຕາແລກປ່ຽນນອກລະບົບສະເລ່ຍ 20,048 ກີບ/ໂດລາ ເພີ່ມຂຶ້ນ 27.03% ທຽບໃສ່ໄລຍະດຽວກັນ (ຈາກ 15,782 ກີບ/ໂດລາ). ສຳລັບອັດຕາແລກ ປ່ຽນເງິນບາດ, ທົ່ວລະບົບທະນາຄານ ສະເລ່ຍ 560.95 ກີບ/ບາດ ເພີ່ມຂຶ້ນ 29.24% ທຽບໃສ່ປີຜ່ານມາ, ໃນຂະນະ ທີ່ອັດຕາແລກປ່ຽນນອກລະບົບ ສະເລ່ຍ 578.78 ກີບ/ບາດ ເພີ່ມຂຶ້ນປະມານ 28.36% (ຂໍ້ມູນຈາກ ທະນາຄານແຫ່ງ ສປປ ລາວ). ການອ່ອນຄ່າຂອງເງິນກີບແມ່ນຍັງສືບຕໍ່ອ່ອນຄ່າເນື່ອງຈາກປັດໄຈພາຍໃນ ແລະ ປັດໄຈພາຍນອກ ເຖິງ ຢ່າງໃດກໍ່ຕາມໃນປີ 2024 ທຫລ ຍັງຈະສືບຕໍ່ດຳເນີນນະໂຍບາຍເງິນຕາໃນທິດທາງທີ່ຮັດກຸມຫຼາຍຂຶ້ນ ແລະ ປະຕິບັດ ນະໂຍບາຍອັດຕາແລກປ່ຽນຕາມກົນໄກຕະຫຼາດ ທີ່ມີການຄຸ້ມຄອງຂອງລັດໃຫ້ຮັດກຸມຍິ່ງຂຶ້ນ.[3] ປັດໄຈທີ່ເຮັດໃຫ້ ເງິນກີບອ່ອນຄ່າ ເນື່ອງຈາກເສດຖະກິດ ສ ປປ ລາວ ຢູ່ໃນສະພາບບອບບາງ, ການສວຍໂອກາດຂອງຕະຫຼາດທີ່ກຳ ນົດອັດຕາແລກປ່ຽນສູງເກີນຂອບທີ່ທະນາຄານກາງກຳນົດໄວ້, ຄວາມຕ້ອງການເງິນຕາຕ່າງປະເທດມີຫຼາຍ-ຖານການ ຜະລິດພາຍໃນບໍ່ເຂັ້ມແຂງ, ເອື່ອຍອີງການນຳເຂົ້າສິນຄ້າຈາກຕ່າງປະເທດ ເປັນຕົ້ນ. ດັ່ງນັ້ນ, ເມື່ອອັດຕາແລກປ່ຽນ ເງິນກີບສືບຕໍ່ອ່ອນຄ່າ ຫຼື ເງິນຕາຕ່າງປະເທດແຂງຄ່າຂຶ້ນ ແມ່ນເຮັດໃຫ້ສິນຄ້ານຳເຂົ້າລວມທັງສິນຄ້າທີ່ເປັນປັດໄຈ ການຜະລິດມີລາຄາສູງຂຶ້ນ.

2. ການເຄື່ອນໄຫວທີ່ພົ້ນເດັ່ນໂດຍຫຍໍ້ ຂອງ ທຄຕລ

ໃນໄລຍະ 3 ເດືອນຕົ້ນປີ 2024 ທຄຕລ ໄດ້ຈັດກອງປະຊຸມສະຫຼຸບການເຄື່ອນໄຫວວຽກງານຂອງຕົນຈຳນວນ 1 ຄັ້ງ (ກອງປະຊຸມປະຈຳປີ 2023), ຈັດກອງປະຊຸມສະພາບໍລິຫານ 2 ຄັ້ງ (ສະໄໝສາມັນ 1 ຄັ້ງ ແລະ ວິສາມັນ 1 ຄັ້ງ); ເຂົ້າຮ່ວມກອງປະຊຸມການສົ່ງເສີມການເງິນສີຂຽວ (PROMOTING GREEN FINANCE IN ASEAN). ພ້ອມນັ້ນ, ໄດ້ສຳເລັດການສະຫຼຸບຜົນການຈັດຕັ້ງປະຕິບັດ KPI ປະຈຳປີ 2023, ກຳນົດເປົ້າໝາຍ KPI ປະຈຳປີ 2024; ຈັດຂັ້ນສາຂາ ແລະ ໜ່ວຍບໍລິການ ປະຈຳປີ 2024 ພ້ອມທັງສຳເລັດການມອບລາງວັນຕ່າງໆ ຕິດພັນ ກັບຜົນການຈັດຕັ້ງປະຕິບັດວຽກງານດັ່ງກ່າວ; ສ້າງຕັ້ງຂະແໜງກວດກາປະຈຳສາຂາ ໃຫ້ແກ່ 2 ສາຂາຄື: ຂະແໜງ ກວດກາປະຈຳສາຂາສາລະວັນ ແລະ ສາຂາເຊກອງ. ນອກຈາກນັ້ນ, ຍັງໄດ້ພົບປະກັບຕະຫຼາດຫຼັກຊັບລາວ ເພື່ອ ປຶກສາຫາລືກ່ຽວກັບສະພາບການດຳເນີນທຸລະກິດໃນໄລຍະຜ່ານມາ ແລະ ທິດທາງແຜນການໃນຕໍ່ໜ້າ.

ດ້ານການພັດທະນາລະບົບ ແລະ ຜະລິດຕະພັນ: ສຳເລັດການພັດທະນາ ແລະ ເປີດໂຕແອັບ Ezykip ສຳລັບນັກທ່ອງທ່ຽວຕ່າງປະເທດທີ່ເຂົ້າມາທ່ຽວ ສປປ ລາວ ເພື່ອເປັນການຕ້ອນຮັບປີທ່ອງທ່ຽວລາວ 2024 ເຊິ່ງແອັບດັ່ງກ່າວເປັນອີກເຄື່ອງມືໃນການຊຳລະສະສາງທີ່ສະດວກສະບາຍ ໂດຍສາມາດສະແກນຜ່ານ LAO QR. ພ້ອມນັ້ນ, ຍັງໄດ້ສຳເລັດການພັດທະນາ ແລະ Go Live ລະບົບ SWIFT ISO20022 ເພື່ອປັບປຸງລະບົບ ການບໍລິການໃຫ້ດີຂຶ້ນ.

[3] Bank of Lao PDR

ດ້ານຕາໜ່າງບໍລິການ: ໄດ້ອອກຂໍ້ຕົກລົງວ່າດ້ວຍການຍົກລະດັບຫ້ອງແລກປ່ຽນອັງເຕົ່າ-ຊ່ອງເມັກ ເປັນໜ່ວຍບໍລິການ (ສາຂາຈຳປາສັກ) ແລະ ອອກຂໍ້ຕົກລົງສ້າງຕັ້ງໜ່ວຍບໍລິການໄຊມຸງຄຸນ ຂຶ້ນກັບສາຂານະຄອນຫຼວງວຽງຈັນ ເຊິ່ງໜ່ວຍບໍລິການທັງ 2 ແຫ່ງ ແມ່ນພວມຢູ່ໃນໄລຍະການຕົບແຕ່ງສະຖານທີ່ ແລະ ຄາດວ່າຈະໄດ້ເປີດບໍລິການຢ່າງເປັນທາງການໃນໄວໆນີ້. ພ້ອມນັ້ນ, ເພື່ອເຮັດໃຫ້ການຄຸ້ມຄອງບໍລິຫານໜ່ວຍລິການມີຄວາມຄ່ອງຕົວ ແລະ ສາມາດຫຼຸດຜ່ອນລາຍຈ່າຍໃນການດຳເນີນງານໄດ້ຫຼາຍຂຶ້ນ ຈຶ່ງໄດ້ມີການໂອນໜ່ວຍບໍລິການພາຍໃນ 3 ສາຂານະຄອນຫຼວງວຽງຈັນ ຕາມການແບ່ງຂອບເຂດຮັບຜິດຊອບຄືນໃໝ່.

ດ້ານການຮ່ວມມືກັບພາກສ່ວນຕ່າງໆ: ເຊັນສັນຍາເຊື່ອມຕໍ່ລະບົບ OnePay E-Commerce ກັບ ບໍລິສັດ ດອງດີ ທະວີໂຊກ ຈຳກັດຜູ້ດຽວ (ຫວຍດອງດີ); ທົບທວນ ແລະ ຕໍ່ສັນຍາການຮ່ວມມືກະເປົາເງິນເອເລັກໂທຣນິກຂອງ 2 ບໍລິສັດຄື: M-Money ແລະ U-Money ແລະ ຕໍ່ສັນຍາ Bill Payment ກັບ 13 ລາຍລູກຄ້າ.

ດ້ານວຽກງານການຕະຫຼາດ: ໄດ້ຈັດກິດຈະກຳການຕະຫຼາດ ເປັນຕົ້ນແມ່ນ OnePay Cash back; Campaign VISA in love; ຝາກຮັກຝາກໃຈ ໄວ້ທີ່ BCEL; ກິດຈະກຳວັນອາເລນທາຍ ແລະ ກິດຈະກຳວັນແມ່ຍິງ.

ນອກຈາກນັ້ນ, ທຄຕລ ຍັງໄດ້ຮັບ 2 ລາງວັນອັນຊົງກຽດ ຄື: ລາງວັນຜູ້ອອກບັດດີເດັ່ນ ປະຈຳປີ 2023 (Best Issuing Member Award 2023) ຂອງບໍລິສັດ **UnionPay** ສາກົນ ແລະ ລາງວັນຜົນງານດີເດັ່ນໃນການປະຕິບັດພັນທະສ່ວຍສາອາກອນເຂົ້າງົບປະມານແຫ່ງລັດ ປະຈຳ ປີ 2022 ຈາກກະຊວງການເງິນ.

3. ຂໍ້ມູນທາງດ້ານການເງິນທີ່ສຳຄັນຂອງ ທຄຕລ

ຮອດທ້າຍໄຕມາດ 1 ປີ 2024 ທຄຕລ ມີຕົວເລກຜົນການດຳເນີນທຸລະກິດ ດັ່ງລຸ່ມນີ້:

- **ຍອດຊັບສິນ:** 138,209,990 ລ້ານກີບ, ທຽບໃສ່ແຜນການປີ 2024 ປະຕິບັດໄດ້ 98% ທຽບໃສ່ໄລຍະດຽວກັນຂອງປີຜ່ານມາເພີ່ມຂຶ້ນ 39%;
- **ຍອດເງິນກູ້ທັງໝົດ:** 49,939,979 ລ້ານກີບ, ທຽບໃສ່ແຜນການປີ 2024 ປະຕິບັດໄດ້ 84% ທຽບໃສ່ໄລຍະດຽວກັນຂອງປີຜ່ານມາເພີ່ມຂຶ້ນ 18%;
- **ອັດຕາສ່ວນ NPL:** 2.97%;
- **ຍອດເງິນຝາກ:** 128,867,243 ລ້ານກີບ, ທຽບໃສ່ແຜນການປີ 2024 ປະຕິບັດໄດ້ 99% ທຽບໃສ່ໄລຍະດຽວກັນຂອງປີຜ່ານມາເພີ່ມຂຶ້ນ 41%;
- **ກຳໄລ/ຂາດທຶນ ກ່ອນອາກອນ:** 116,584 ລ້ານກີບ, ທຽບໃສ່ແຜນການປີ 2024 ປະຕິບັດໄດ້ 25%;
- **ກຳໄລ/ຂາດທຶນ ຫຼັງອາກອນ (ກຳໄລສຸດທິ):** 110,182 ລ້ານກີບ, ທຽບໃສ່ແຜນການປີ 2024 ປະຕິບັດໄດ້ 28%.

III. ຂໍ້ມູນທົ່ວໄປ ແລະ ຂໍ້ມູນສຳຄັນບາງດ້ານ ຂອງ ທຄຕລ

- **ທີ່ຕັ້ງ ແລະ ເຄືອຂ່າຍ**

ສຳນັກງານໃຫຍ່ຂອງທະນາຄານ ຕັ້ງຢູ່ເລກທີ 01, ຖະໜົນປາງຄຳ, ບ້ານຊຽງຍືນ, ເມືອງຈັນທະບູລີ, ນະຄອນຫຼວງວຽງຈັນ. ນະວັນທີ 31 ມີນາ 2024 ທະນາຄານມີ (1) ສຳນັກງານໃຫຍ່, (6) ວິສາຫະກິດຂາຮຸ້ນ ແລະ ວິສາຫະກິດປະສົມ, (20) ສາຂາ, (99) ໜ່ວຍບໍລິການ ແລະ (12) ຫ້ອງແລກປ່ຽນເງິນຕາ ທົ່ວ ສປປ ລາວ.

- **ຕິດຕໍ່ ແລະ ພົວພັນ ສອບຖາມຂໍ້ມູນຕ່າງໆຂອງ ທຄຕລ**
  - ເບີໂທ (+856-21) 213200 ຫຼື ໂທ 1555
  - ແຟັກ (+856-21) 213202
  - ອີເມວ: bcelhqv@bcel.com.la
  - ເວັບໄຊ: www.bcel.com.la

- **ປະຫວັດຄວາມເປັນມາໂດຍຫຍໍ້ ຂອງ ທຄຕລ**

ທະນາຄານການຄ້າຕ່າງປະເທດລາວ ມະຫາຊົນ ດຳເນີນທຸລະກິດໃນຮູບແບບມະຫາຊົນ ແລະ ຈົດທະບຽນຢູ່ໃນຕະຫຼາດຫຼັກຊັບ ສປປ ລາວ.

ທະນາຄານການຄ້າຕ່າງປະເທດລາວ ໄດ້ຮັບການສ້າງຕັ້ງຂຶ້ນພາຍໃຕ້ໃບອະນຸຍາດສ້າງຕັ້ງທະນາຄານ ເລກທີ 129/ທຫລ, ລົງວັນທີ 01 ພະຈິກ 1989, ໃນວັນທີ 23 ທັນວາ 2010 ທະນາຄານໄດ້ສຳເລັດການຂາຍຮຸ້ນອອກສູ່ມະຫາຊົນ. ທະນາຄານໄດ້ປ່ຽນຊື່ມາເປັນ ທະນາຄານການຄ້າຕ່າງປະເທດລາວ ມະຫາຊົນ ອີງຕາມໃບທະບຽນວິສາຫະກິດ ເລກທີ 0061/ຫຈທ, ລົງວັນທີ 10 ມັງກອນ 2011 ອອກໂດຍກົມທະບຽນ ແລະ ຄຸ້ມຄອງວິສາຫະກິດ, ກະຊວງອຸດສາຫະກຳ ແລະ ການຄ້າ ຂອງ ສປປ ລາວ. ໃນວັນທີດັ່ງກ່າວ, ລັດຖະບານ ເຊິ່ງຕາງໜ້າໂດຍກະຊວງການເງິນເປັນຜູ້ຖືຮຸ້ນໃຫຍ່ສຸດ ໂດຍຖືຮຸ້ນ 80% ຂອງຮຸ້ນທັງໝົດ.

ວັນທີ 15 ກໍລະກົດ 2011, ກະຊວງການເງິນ ຂາຍຮຸ້ນສາມັນ 10% (ເທົ່າກັບ 13,657,759 ຮຸ້ນ) ໃຫ້ຄູ່ຮ່ວມຮຸ້ນທາງຍຸດທະສາດ ຊື່ວ່າ ທະນາຄານ COFIBRED ອີງຕາມສັນຍາການຊື້-ຂາຍຮຸ້ນສາມັນ ລະຫວ່າງ ກະຊວງການເງິນ ແລະ ທະນາຄານ COFIBRED.

ໃນວັນທີ 17 ສິງຫາ 2017 ທຄຕລ ໄດ້ສະເໜີຂາຍຮຸ້ນໃຫ້ແກ່ຜູ້ຖືຮຸ້ນເດີມ ແລະ ຂາຮຸ້ນໃໝ່ ເພື່ອເພີ່ມທຶນຈົດທະບຽນ. ທະນາຄານໄດ້ຮັບຂໍ້ຕົກລົງສະບັບໃໝ່ ເລກທີ 21/ທຫລ, ລົງວັນທີ 13 ກັນຍາ 2017 ອອກໂດຍທະນາຄານແຫ່ງ ສປປ ລາວ. ໃນວັນທີ 15 ກັນຍາ 2017 ຕະຫຼາດຫຼັກຊັບລາວໄດ້ຢັ້ງຢືນວ່າທະນາຄານໄດ້ເພີ່ມທຶນຈົດທະບຽນຈຳນວນ 355,728,500,000 ກີບ (ເທົ່າກັບ 71,145,700 ຮຸ້ນ) ຕາມໃບຢັ້ງຢືນເລກທີ 01/ຕລຊລ, ລົງວັນທີ 15 ກັນຍາ 2017 ແລະ ໃບທະບຽນວິສາຫະກິດສະບັບປັບປຸງໃຫມ່ ເລກທີ 0429/ຫຈທ, ລົງວັນທີ 18 ພຶດສະພາ 2018 ອອກໂດຍ ກະຊວງອຸດສາຫະກຳ ແລະ ການຄ້າ.

ໃນວັນທີ 11 ຕຸລາ 2019 ສຳນັກງານຄະນະກຳມະການຄຸ້ມຄອງຫຼັກຊັບໄດ້ອະນຸມັດໃຫ້ທະນາຄານປັບປຸງໂຄງສ້າງຜູ້ຖືຮຸ້ນໂດຍການສະເໜີຂາຍສິດຊື້ຮຸ້ນໃຫ້ແກ່ຜູ້ຖືຮຸ້ນເດີມ ແລະ ສາທາລະນະຊົນ. ຈຸດປະສົງຂອງການແບ່ງຮຸ້ນຂາຍຂອງລັດຖະບານ ແມ່ນເພື່ອສະໜັບສະໜູນສະເໜີຂາຍໃຫ້ແກ່ຜູ້ຖືຮຸ້ນທີ່ຫຼາກຫຼາຍ ເພື່ອພັດທະນາທະນາຄານໃຫ້ເຕີບໃຫຍ່ຂະຫຍາຍຕົວ ແລະ ໝັ້ນຄົງ. ພ້ອມດຽວກັນນັ້ນໃນວັນທີ 29 ພະຈິກ 2019 ສຳນັກງານຄະນະກຳມະການຄຸ້ມຄອງຫຼັກຊັບໄດ້ຢັ້ງຢືນວ່າ ທະນາຄານໄດ້ສຳເລັດການສະເໜີຂາຍຮຸ້ນໃນອັດຕາສ່ວນ 10% ຂອງທະນາຄານໄດ້ສຳເລັດ.

ປະຈຸບັນ ໂຄງສ້າງການຖືຮຸ້ນຂອງທະນາຄານ: ລັດຖະບານຖືຮຸ້ນ 60%, ນັກລົງທຶນພາຍໃນ (ລວມທັງພະນັກງານ ທຄຕລ) ແລະ ນັກລົງທຶນຕ່າງປະເທດ 30% ແລະ ຄູ່ຮ່ວມຮຸ້ນທາງຍຸດທະສາດ 10%.

ກິດຈະກຳຫລັກຂອງທະນາຄານ ແມ່ນເພື່ອສະໜອງການບໍລິການ ລວມທັງການລະດົມທຶນ ແລະ ຮັບຝາກເງິນໄລຍະສັ້ນ, ກາງ ແລະ ຍາວ ຈາກນິຕິບຸກຄົນ ແລະ ບຸກຄົນ; ສະໜອງເງິນກູ້ໄລຍະສັ້ນ, ກາງ, ຍາວ ໃຫ້ແກ່ຫົວ ໜ່ວຍທຸລະກິດ ແລະ ບຸກຄົນຕາມຈຸດປະສົງ ແລະ ຄວາມສາມາດໃນການສະໜອງທຶນຂອງທະນາຄານ; ບໍລິການແລກປ່ຽນເງິນຕາຕ່າງປະເທດ, ບໍລິການຊຳລະສະສາງ, ບໍລິການການຄ້າລະຫວ່າງປະເທດ, ບໍລິການໜັງສືສິນເຊື່ອ, ຄ້ຳປະກັນ, ໃຫ້ບໍລິການຊື້ຂາຍອັດຖາມິຄ່າອື່ນໆ ແລະ ໃຫ້ບໍລິການດ້ານທະນາຄານອື່ນໆ ທີ່ໄດ້ຮັບອະນຸຍາດຈາກ

ທະນາຄານແຫ່ງ ສປປ ລາວ ໂດຍສະເພາະແມ່ນບໍລິການດ້ານປະກັນໄພ, ບໍລິການເປັນນາຍໜ້າຊື້ຂາຍຫຼັກຊັບເປັນຕົ້ນ.

ທຶນຈົດທະບຽນ

ທຶນຈົດທະບຽນ ນະວັນທີ 31 ມີນາ 2024 ແມ່ນ 1,038,617 ລ້ານກີບ (ວັນທີ 31 ທັນວາ 2023: 1,038,617 ລ້ານກີບ).

IV. ໂຄງຮ່າງການຈັດຕັ້ງສະພາບໍລິຫານ, ຄະນະອຳນວຍການ ແລະ ການເຄື່ອນໄຫວ ຂອງຄະນະກຳມະການຂຶ້ນກັບສະພາບໍລິຫານ

1. ໂຄງຮ່າງການຈັດຕັ້ງ ແລະ ປະຫວັດໂດຍຫຍໍ້ ຂອງສະມາຊິກສະພາບໍລິຫານ

1.1 ສະພາບໍລິຫານ ທະນາຄານການຄ້າຕ່າງປະເທດລາວ ມະຫາຊົນ:

ສະມາຊິກສະພາບໍລິຫານ ທະນາຄານການຄ້າຕ່າງປະເທດລາວ ມະຫາຊົນ ນະວັນທີ 31 ມີນາ 2024 ປະກອບ ມີ 8 ທ່ານ:

ຊື່ ແລະ ນາມສະກຸນ	ຕຳແໜ່ງ	ວັນທີແຕ່ງຕັ້ງ
ທ່ານ ບຸນປອນ ວັນນະຈິດ	ປະທານສະພາບໍລິຫານ	ແຕ່ງຕັ້ງວັນທີ 27 ເມສາ 2023
ທ່ານ ຄຳສຸກ ສູນດາລາ	ກຳມະການອິດສະຫຼະ, ຮອງປະທານ	ແຕ່ງຕັ້ງຄືນວັນທີ 29 ຕຸລາ 2021
ທ່ານ ນ. ສາຍສະໝອນ ຈັນທະຈັກ	ກຳມະການ	ແຕ່ງຕັ້ງວັນທີ 22 ພະຈິກ 2022
ທ່ານ Stephane Mangiavacca	ກຳມະການ	ແຕ່ງຕັ້ງວັນທີ 29 ພຶດສະພາ 2020
ທ່ານ ປະສົມພັດ ຄຳຕັນ	ກຳມະການ	ແຕ່ງຕັ້ງວັນທີ 03 ສິງຫາ 2021
ທ່ານ ຣສ ທອງເພັດ ຈັນທະນີວົງ	ກຳມະການອິດສະຫຼະ	ແຕ່ງຕັ້ງວັນທີ 03 ສິງຫາ 2021
ທ່ານ ນ. ລັດດາວັນ ຊົງວິໄລ	ກຳມະການອິດສະຫຼະ	ແຕ່ງຕັ້ງວັນທີ 03 ສິງຫາ 2021
ທ່ານ ສອນໄຊ ສີລາເພັດ	ກຳມະການອິດສະຫຼະ	ແຕ່ງຕັ້ງວັນທີ 03 ສິງຫາ 2021

1.2. ປະຫວັດຫຍໍ້ຂອງສະພາບໍລິຫານ



ທ່ານ ບຸນປອນ ອັນນະຈິດ
ປະທານສະພາບໍລິຫານ

ຊີວະປະຫວັດຫຍໍ້:

ວັນ ເດືອນ ປີເກີດ : 14/04/1959
ສັນຊາດ : ລາວ
ພາສາ : ອັງກິດ, ຫວຽດນາມ
ຕຳແໜ່ງ : ຮອງລັດຖະມົນຕີກະຊວງການເງິນ

ປະຫວັດການສຶກສາ:

2012: ປະລິນຍາໂທ ສາຂາ ການຄຸ້ມຄອງເສດຖະກິດ, ສະຖາບັນການເມືອງ-ການປົກຄອງແຫ່ງຊາດ.
2010: ປະລິນຍາຕີ ສາຂາ ການຄຸ້ມຄອງເສດຖະກິດ, ສະຖາບັນການເມືອງ-ການປົກຄອງແຫ່ງຊາດ.
1998: ຊັ້ນສູງ ສາຂາ ການຄຸ້ມຄອງເສດຖະກິດ, ສະຖາບັນການເມືອງ-ການປົກຄອງແຫ່ງຊາດ.

ປະຫວັດການເຮັດວຽກ:

02/04/2021 - ປັດຈຸບັນ: ຮອງລັດຖະມົນຕີກະຊວງການເງິນ
2016 - 2021: ຮອງປະທານອົງການກວດສອບແຫ່ງລັດ
2010 - 2016: ຮອງປະທານຄະນະປັບປຸງທຸລະກິດແຫ່ງຊາດ ຢູ່ຫ້ອງວ່າການລັດຖະບານ
2005 - 2010: ຮອງເຈົ້າແຂວງອຸດົມໄຊ
1999 - 2005: ຫົວໜ້າພະແນກການເງິນ ແຂວງອຸດົມໄຊ
1995 - 1998: ຮອງຫົວໜ້າພະແນກແຜນການ-ການຮ່ວມມື ແຂວງອຸດົມໄຊ
1989 - 1995: ຫົວໜ້າຫ້ອງການ ການເງິນເມືອງຮຸນ, ແຂວງອຸດົມໄຊ
1985 - 1988: ຮອງຫົວໜ້າຫ້ອງການເສດຖະກິດແຜນການ ແລະ ການເງິນເມືອງຮຸນ, ແຂວງອຸດົມໄຊ
1984 - 1985: ຫົວໜ້າຫ້ອງການສະຖິຕິແຜນການ ເມືອງຮຸນ, ແຂວງອຸດົມໄຊ
1981 - 1984: ພະນັກງານວິຊາການ ຢູ່ຫ້ອງການສະຖິຕິແຜນການ, ເມືອງ ຮຸນ, ແຂວງອຸດົມໄຊ
1976 - 1981: ເປັນທະຫານກອງພັນ 28 ແລະ ຫ້ອງການ 63



ທ່ານ ຄຳສຸກ ສູນດາລາ
ຮອງປະທານສະພາບໍລິຫານ

ຊີວະປະຫວັດຫຍໍ້:

ວັນ ເດືອນ ປີເກີດ : 03/06/1945
ສັນຊາດ : ລາວ
ພາສາ : ລາວ, ອັງກິດ, ຝຣັ່ງ
ຕຳແໜ່ງ : ກຳມະການອິດສະຫຼະ

ປະຫວັດການສຶກສາ:

1993: ມະຫາວິທະຍາໄລຈອດສ໌ທາວທີ່ນະຄອນວໍຊິງຕັນປະເທດສະຫະລັດອາເມລິກາ;
1985: ສະຖາບັນຄຸ້ມຄອງທະນາຄານແຫ່ງອິນເດຍທີ່ເມືອງປູເນ ປະເທດອິນເດຍ;
1974: ສູນຝຶກອົບຮົມລະຫວ່າງປະເທດ ທີ່ ເມືອງ ນາໂກຍາປະເທດຍີ່ປຸ່ນ;
1972: ການຝຶກອົບຮົມ: ດ້ານເສດຖະສາດ ຈາກສະຖາບັນຄຸ້ມຄອງເສດຖະກິດ ຂອງອົງການສະຫະປະຊາຊາດ ທີ່ບາງກອກປະເທດໄທ;
1969: ຈົບອຸດົມ ແລະ ລະດັບປະລິນຍາຕຣີ ຈາກປະເທດ ອິດສະຕາລີ, ມະຫາວິທະຍາໄລນິວຊາວເວ.

ປະຫວັດການເຮັດວຽກ:

2015: ເປັນທີ່ປຶກສາດ້ານການເງິນ ແລະ ການທະນາຄານ ຂອງບໍລິສັດລ້ານຊ້າງ ມິເນີໂຮນ ຈຳກັດ (ຊຶ່ງເປັນ ບໍລິສັດໃນເຄືອຂອງກຸ່ມບໍລິສັດໂອເຊຍນາ ແຫ່ງເມືອງ ເມວເບີນ ປະເທດອິດສະຕາລີ);
1995 –1996: ເປັນທີ່ປຶກສາຜູ້ອຳນວຍການ ທີ່ອົງການ ການເງິນລະຫວ່າງປະເທດ ກຸ່ມພາກພື້ນ ອາຊີຕາເວັນອອກສ່ຽງໃຕ້, ທີ່ນະຄອນວໍຊິງຕັນ ປະເທດອາເມລິກາ;
1990 –1994 ແລະ 1997-2005: ທະນາຄານແຫ່ງ ສປປ ລາວ;
1976 –1989: ຢູ່ທະນາຄານການຄ້າຕ່າງປະເທດລາວ;
1970 –1975: ຢູ່ທະນາຄານພັດທະນາລາວ.



ທ່ານ ນາງ ສາຍສະໝອນ ຈັນທະຈັກ
ກຳມະການ

ຊີວະປະຫວັດຫຍໍ້:

ວັນ ເດືອນ ປີເກີດ : 15/03/1969

ສັນຊາດ : ລາວ

ພາສາ : ລາວ, ອັງກິດ

ຕຳແໜ່ງ : ຜູ້ອຳນວຍການ ທະນາຄານການຄ້າຕ່າງປະເທດລາວ ມະຫາຊົນ.

ປະຫວັດການສຶກສາ:

ທິດສະດີການເມືອງ: ຊັ້ນສູງ.

2007: ປະລິນຍາໂທ ສາຂາ ບໍລິຫານທຸລະກິດຕ່າງປະເທດ ຈາກປະເທດ ອົດສະຕາລີ (Flinders University, Australia);

1998: ປະລິນຍາໂທ ສາຂາ ບໍລິຫານລັດ ຈາກປະເທດ ຍີ່ປຸ່ນ (Saitama University, Japan);

1993: ປະລິນຍາໂທ ສາຂາ ເສດຖະກິດມະຫາພາກ ຈາກມະຫາວິທະຍາໄລ ກູບານ ປະເທດ ລັດເຊຍ (Kuban State University, Russia).

ປະຫວັດການເຮັດວຽກ:

08/2022 – ປັດຈຸບັນ: ຜູ້ອຳນວຍການ ທະນາຄານການຄ້າຕ່າງປະເທດລາວ ມະຫາຊົນ;

09/2021 – 08/2022: ຜູ້ອຳນວຍການໃຫຍ່, ຕະຫລາດຫລັກຊັບລາວ;

2015: ຫົວໜ້າສຳນັກງານ ຄະນະກຳມະການຄຸ້ມຄອງຫລັກຊັບ, ທະນາຄານ ແຫ່ງ ສປປ ລາວ;

04/2010: ຮອງຫົວໜ້າສຳນັກງານຄະນະກຳມະການຄຸ້ມຄອງຫລັກຊັບ, ທະນາຄານ ແຫ່ງ ສປປ ລາວ;

2009: ຮອງຫົວໜ້າກົມນະໂຍບາຍເງິນຕາ, ທະນາຄານ ແຫ່ງ ສປປ ລາວ;

1993 – 1997: ພະນັກງານກົມນະໂຍບາຍເງິນຕາ, ທະນາຄານ ແຫ່ງ ສປປ ລາວ.



ທ່ານ Stephane MANGIAVACCA
ກຳມະການ

ຊີວະປະຫວັດຫຍໍ້:

ວັນ ເດືອນ ປີເກີດ: 11/07/1975

ສັນຊາດ : ຝຣັ່ງ

ພາສາ : ຝຣັ່ງ, ອັງກິດ, ສະເປນ, ຈີນ ແລະ ຍີ່ປຸ່ນ

ປະຫວັດການສຶກສາ:

1996 – 1999 : ສຶກສາທີ່ມະຫາວິທະຍາໄລ Ecole Nationale Superieure des Mines de Saint-Etienne.

- ຈົບຊັ້ນສູງສາຂາ ວິສະວະກຳສາດ ດ້ວຍກຽດນິຍົມ;
- ເຂົ້າຮ່ວມໂຄງການແລກປ່ຽນກ່ຽວກັບວິສະວະກຳສິ່ງແວດລ້ອມ ທີ່ University of New Brunswick, ປະເທດ Canada;
- ຫລັກສູດປະລິນຍາຕີເສດຖະສາດ.

ປະຫວັດການເຮັດວຽກ:

01/2020 – ປະຈຸບັນ : ຫົວໜ້າຝ່າຍທຸລະກິດຕ່າງປະເທດ, BRED Banque Populaire, ປະເທດ France;

2009 – 2010: ຫົວໜ້າຝ່າຍຄຸ້ມຄອງຄວາມສ່ຽງ ແລະ ການປະຕິບັດຕາມ, BRED Banque Populaire, ປະເທດ France;

2001 – 2009: ຜູ້ຈັດການອາວຸໂສຝ່າຍກວດສອບ ທີ່ Central Audit, Banque Populaire - Natixis - Coface (BPCE GROUP);

1999 – 2001: ຜູ້ຊ່ວຍວຽກກ່ຽວກັບການຄ້າ ທີ່ French Trade Commission, Guangzhou, China;

1999: ພະນັກງານຝຶກຫັດທີ່ EDF, French Company of Electricity, Lyon, France;

1998: ພະນັກງານຝຶກຫັດທີ່ The Yokohama Rubber Company, Hiratsuka, Japan;

1997: ພະນັກງານຝຶກຫັດທີ່ Pechiney-Aluminium, lssoire, France.



ທ່ານ ປະສົມເພັດ ຄຳຕັນ

ກຳມະການ

ຊີວະປະຫວັດຫຍໍ້:

ວັນ ເດືອນ ປີເກີດ : 25/05/1970

ສັນຊາດ : ລາວ

ພາສາ : ລາວ, ອັງກິດ

ຕຳແໜ່ງ : ຮອງຫົວໜ້າກົມ, ກົມປະຕິຮູບລັດວິສາຫະກິດ ແລະ ການປະກັນໄພ, ກະຊວງການເງິນ

ປະຫວັດການສຶກສາ:

ປະຫວັດການສຶກສາ:

2001 - 2003: ປະລິນຍາໂທເສດຖະກິດທຸລະກິດ ທີ່ວິທະຍາໄລກຸງຮີ, ປະເທດ ສ ເກົາຫຼີ;

1987 - 1993: ປະລິນຍາຕີຄຸ້ມຄອງກົນຈັກ ທີ່ມະຫາວິທະຍາໄລຊັບພະວິຊາ 2 ທັນວາ ສປປ ລາວ.

ປະຫວັດການເຮັດວຽກ:

08/2020 - ປະຈຸບັນ : ຮອງຫົວໜ້າກົມປະຕິຮູບລັດວິສາຫະກິດ ແລະ ການປະກັນໄພ, ກະຊວງການເງິນ;

2016 - 2020: ຮອງຫົວໜ້າກົມນະໂຍບາຍການເງິນ ແລະ ນິຕິກຳ, ກະຊວງການເງິນ;

2013 - 2016: ຫົວໜ້າພະແນກຄຸ້ມຄອງທຶນກູ້ຢືມ ແລະ ຊ່ວຍເຫຼືອລ້າ, ກົມການເງິນຕ່າງປະເທດ, ກະຊວງການເງິນ;

2008 - 2013: ຫົວໜ້າຄຸ້ມຄອງໂຄງການກູ້ຢືມ ແລະ ຊ່ວຍເຫຼືອຫຼ້າ ຈາກທະນາຄານໂລກ ກະຊວງການເງິນ;

2007 - 2008: ຮອງຫົວໜ້າພະແນກສະຖິຕິການເງິນ, ກົມນະໂຍບາຍການເງິນ, ກະຊວງການເງິນ;

1998 - 2007: ວິຊາການກົມງົບປະມານ, ກະຊວງການເງິນ;

1994 - 1998: ວິຊາການກົມເງິນຕາຕ່າງປະເທດ, ກະຊວງການເງິນ.



ທ່ານ ທອງເພັດ ຈັນທະນິວົງ
ກຳມະການອິດສະຫຼະ

ຊີວະປະຫວັດຫຍໍ້:

ວັນ ເດືອນ ປີເກີດ : 20/04/1962

ສັນຊາດ : ລາວ

ພາສາ : ລາວ, ອັງກິດ

ຕຳແໜ່ງ : ຫົວໜ້າໂຄງການ (Advancing Strategic Management, Leadership and Fundraising in Higher Education in Asia / ASTRA,) Erasmus+.

ປະຫວັດການສຶກສາ:

2018 – 2021: ຄົ້ນຄວ້າປະລິນຍາເອກ ດ້ານການບັນຊີ (PhD Candidate) ຢູ່ມະຫາວິທະຍາໄລສີປະທຸມ ປະເທດໄທ;

2019 : ໄດ້ຮັບປະກາດສະນິຍະບັດ ນັກຊ່ຽວຊານບັນຊີລາວ;

1998 – 2002: ຄົ້ນຄວ້າປະລິນຍາໂທ ດ້ານການພົວພັນສາກົນ ຢູ່ມະຫາວິທະຍາໄລ De Mons ປະເທດແບນຊິກ;

1998 – 2000: ຄົ້ນຄວ້າປະລິນຍາໂທ ດ້ານບໍລິຫານທຸລະກິດ ຢູ່ມະຫາວິທະຍາໄລເທັກໂນໂລຢີແຫ່ງເອເຊັຍ (AIT) ປະເທດໄທ;

1996 – 1997: ສຶກສາລະດັບປະລິນຍາຕີ ດ້ານບໍລິຫານທຸລະກິດ ໂຄງການຮ່ວມມືສະຖາບັນການເມືອງການປົກຄອງແຫ່ງຊາດ ແລະ ມະຫາວິທະຍາໄລເທັກໂນໂລຢີແຫ່ງເອເຊັຍ (AIT) ປະເທດໄທ;

1981 – 1985: ສຶກສາລະດັບປະລິນຍາຕີ ດ້ານຄະນິດສາດ ຢູ່ມະຫາວິທະຍາໄລແຫ່ງຊາດ.

ປະຫວັດການເຮັດວຽກ:

2018-2023: ເປັນຮອງຄະນະບໍດີ ຄະນະເສດຖະສາດ ແລະ ບໍລິຫານທຸລະກິດ (ຮັບຜິດຊອບຫຼັກສູດ ປະລິນຍາໂທ ແລະ ປະລິນຍາເອກ), ມະຫາວິທະຍາໄລແຫ່ງຊາດ

2006: ເປັນຮອງສາດສະດາຈານ ສາຂາບໍລິຫານທຸລະກິດ (ເລກທີ 304-178/ນຍ ລົງວັນທີ 04/09/2006)

2018-2024: ເປັນປະທານຄະນະກຳມະທິການຫຼັກສູດ ການບັນຊີ ແລະ ການກວດສອບ (CPA) ຂອງສະພາວິຊາຊີບນັກບັນຊີ ແລະ ນັກກວດສອບລາວ

2018-2022: ເປັນຄະນະບໍລິຫານງານສະພາວິຊາຊີບນັກບັນຊີ ແລະ ນັກກວດສອບລາວ

2018-2024: ເປັນກຳມະການອິດສະຫຼະຂອງສະພາບໍລິຫານ ລັດວິສາຫະກິດ ລາວໂທລະຄົມ

2023-2024: ເປັນຄະນະຄົ້ນຄວ້າ ແລະ ປັບປຸງລະບົບບັນຊີວິສາຫະກິດ, ຮູບແບບເອກະສານການລາຍງານການເງິນ, ການກຳນົດຜັງບັນຊີ ແລະ ເທັກນິກການບັນທຶກບັນຊີວິສາຫະກິດ (ກະຊວງການເງິນ)

2018-2024: ເປັນອາຈານສອນຫຼັກສູດນາໆຊາດ ແລະ ປະລິນຍາໂທ ສາຂາບໍລິຫານທຸລະກິດ,ເສດຖະສາດ ຂອງ ມະຫາວິທະຍາໄລ ແຫ່ງຊາດ ແລະ ສະຖາບັນການທະນາຄານ

2020-2024: ເປັນອາຈານຮັບເຊີນຫຼັກສູດ MBA ມະຫາວິທະຍາໄລຂອນແກນ, ປະເທດໄທ

2015-2024: ເປັນຄູຝຶກ ມາດຕະຖານການບັນທຶກບັນຊີສາກົນ (IFRS) ແລະ ມາດຖານການກວດສອບສາກົນ (AIS)



ທ່ານ ນ. ລັດຕາອັນ ຊົງວິໄລ
ກຳມະການອິດສະຫຼະ

ຊີວະປະຫວັດຫຍໍ້:

ວັນ ເດືອນ ປີເກີດ : 27/04/1982

ສັນຊາດ : ລາວ

ພາສາ : ລາວ, ອັງກິດ

ຕຳແໜ່ງ : ຫົວໜ້າສະຖາບັນຄົ້ນຄວ້າເສດຖະກິດມະຫາ ພາກ, ສະຖາບັນວິທະຍາສາດເສດຖະກິດ ແລະ ສັງຄົມແຫ່ງຊາດ.

ປະຫວັດການສຶກສາ:

2008 – 2009: ຄົ້ນຄວ້າປະລິນຍາໂທ ດ້ານນະໂຍບາຍບໍລິຫານພາກລັດ ຢູ່ສະຖາບັນ GRIPS, ປະເທດຍີ່ປຸ່ນ;

2000 – 2005: ສຶກສາລະດັບປະລິນຍາຕີ ດ້ານເສດຖະສາດ ຄະນະເສດຖະສາດ ແລະ ບໍລິຫານທຸລະກິດ, ມະຫາວິທະຍາໄລແຫ່ງຊາດ;

2004: ນັກສຶກສາແລກປ່ຽນມະຫາວິທະຍາໄລແຫ່ງຊາດສິງກະໂປ, ປະເທດສິງກະໂປ.

ປະຫວັດການເຮັດວຽກ:

2020 – ປັດຈຸບັນ : ຫົວໜ້າສະຖາບັນຄົ້ນຄວ້າເສດຖະກິດມະຫາພາກ, ສະຖາບັນວິທະຍາສາດ ເສດຖະກິດ ແລະ ສັງຄົມແຫ່ງຊາດ;

2019 – 2020: ຮັກສາການຫົວໜ້າສູນຄົ້ນຄວ້ານະໂຍບາຍເສດຖະກິດມະຫາພາກ ແລະ ປັບປຸງໂຄງສ້າງ ເສດຖະກິດ, ສະຖາບັນຄົ້ນຄວ້າເສດຖະກິດແຫ່ງຊາດ;

2016 – 2019: ຮອງຫົວໜ້າສູນຄົ້ນຄວ້ານະໂຍບາຍເສດຖະກິດມະຫາພາກ ແລະ ປັບປຸງໂຄງສ້າງເສດຖະກິດ, ສະຖາບັນຄົ້ນຄວ້າເສດຖະກິດແຫ່ງຊາດ;

2015 – 2016: ຫົວໜ້າພະແນກຢູ່ສະຖາບັນຄົ້ນຄວ້າເສດຖະກິດແຫ່ງຊາດ, ກະຊວງແຜນການ ແລະ ການລົງທຶນ;

2011 – 2015: ຮອງຫົວໜ້າພະແນກຢູ່ສະຖາບັນຄົ້ນຄວ້າເສດຖະກິດແຫ່ງຊາດ, ກະຊວງແຜນການ ແລະ ການລົງທຶນ;

2005 – 2011: ຜູ້ຊ່ວຍນັກຄົ້ນຄວ້າ ຢູ່ສະຖາບັນຄົ້ນຄວ້າເສດຖະກິດແຫ່ງຊາດ, ກະຊວງແຜນການ ແລະ ການລົງທຶນ.



ທ່ານ ສອນໄຊ ສີລາເພັດ

ກຳມະການອິດສະຫຼະ

ຊີວະປະຫວັດຫຍໍ້:

ວັນ ເດືອນ ປີເກີດ : 01/01/1977

ສັນຊາດ : ລາວ

ພາສາ : ລາວ, ອັງກິດ

ຕຳແໜ່ງ : ປະທານ ສະພາວິຊາຊີບ ນັກບັນຊີ ແລະ ນັກກວດສອບ

ປະຫວັດການສຶກສາ:

2017 – 2021: ສຶກສາ ແລະ ຄົ້ນຄວ້າປະລິນຍາເອກ ດ້ານການບັນຊີ (PhD Candidate) ມະຫາວິທະຍາໄລ ສີປະທຸມ, ປະເທດໄທ;

2013 – 2014: ສຶກສາ ແລະ ຄົ້ນຄວ້າປະລິນຍາໂທ ດ້ານການເງິນ ຢູ່ວິທະຍາໄລເທັກໂນໂລຢີສັນຕະພົນ, ປະເທດໄທ;

1995 – 2000: ສຶກສາລະດັບປະລິນຍາຕີ ດ້ານບໍລິຫານທຸລະກິດ ວິທະຍາໄລຄອມເຊັນຕີ;

1995 – 1998: ສຶກສາລະດັບຊັ້ນສູງ ດ້ານການບັນຊີ ຢູ່ວິທະຍາໄລປາກປ່າສັກ;

06/2016: ເປັນສະມາຊິກຂອງ CPA ອິດສະຕາລີ;

2018: ເປັນສະມາຊິກຂອງ CPA ລາວ;

1999 – 2000: ເປັນສະມາຊິກຂອງ Lao Institute of Chartered Public Accountants (LICPA).

ປະຫວັດການເຮັດວຽກ:

05/2022 – ປັດຈຸບັນ: ເປັນປະທານ Lao Chamber of Professional Accountants and Auditor (LCPAA);

2015 – 05/2022: ເປັນຮອງປະທານ Lao Chamber of Professional Accountants and Auditor (LCPAA);

01/2016 – 12/2017: ເປັນປະທານ ASEAN Federation of Accountants (AFA);

01/2014 – 12/2015: ເປັນຮອງປະທານ ASEAN Federation of Accountants (AFA);

07/2011 – 09/2014: ເປັນຜູ້ອຳນວຍການ Ernst & Young Lao Limited;

07/2008 – 06/2011: ເປັນຜູ້ຈັດການອາວຸໂສຝ່າຍກວດສອບ Ernst & Young Lao Limited;

08/2007 – 06/2008: ເປັນຜູ້ຈັດການຝ່າຍກວດສອບ Ernst & Young Lao Limited;

05/2004 – 08/2007: ເປັນຜູ້ຈັດການຝ່າຍກວດສອບ PricewaterhouseCoopers (Lao) Ltd;

2002 – 05/2004: ເປັນພະນັກງານກວດສອບອາວຸໂສປະສົບການ PricewaterhouseCoopers (Lao) Ltd;

2000 – 2001: ເປັນພະນັກງານກວດສອບອາວຸໂສ PricewaterhouseCoopers (Lao) Ltd;

1998 – 1999: ເປັນພະນັກງານຜູ້ຊ່ວຍກວດສອບ PricewaterhouseCoopers (Lao) Ltd.

2. ໂຄງຮ່າງການຈັດຕັ້ງ ແລະ ປະຫວັດໂດຍຫຍໍ້ ຂອງຄະນະອຳນວຍການ

2.1 ຄະນະອຳນວຍການ:

ຄະນະອຳນວຍການ ທະນາຄານການຄ້າຕ່າງປະເທດລາວ ມະຫາຊົນ ນະວັນທີ 31 ມີນາ 2024 ປະກອບມີ 5 ທ່ານ:

ຊື່ ແລະ ນາມສະກຸນ	ຕຳແໜ່ງ	ວັນທີແຕ່ງຕັ້ງ
ທ່ານ ນ. ສາຍສະໝອນ ຈັນທະຈັກ	ຜູ້ອຳນວຍການ	ແຕ່ງຕັ້ງວັນທີ 01 ສິງຫາ 2022
ທ່ານ ນັນທະລາດ ແກ້ວປະເສີດ	ຮອງຜູ້ອຳນວຍການ	ແຕ່ງຕັ້ງວັນທີ 30 ກັນຍາ 2014
ທ່ານ ກົງສັກ ສຸພອນສີ	ຮອງຜູ້ອຳນວຍການ	ແຕ່ງຕັ້ງວັນທີ 01 ພຶດສະພາ 2021
ທ່ານ ນ. ບົວໄພວັນ ນັນດາວົງ	ຮອງຜູ້ອຳນວຍການ	ແຕ່ງຕັ້ງວັນທີ 01 ພຶດສະພາ 2021
ທ່ານ ສາຍຈິດ ສິມມະວົງ	ຮອງຜູ້ອຳນວຍການ	ແຕ່ງຕັ້ງວັນທີ 01 ພຶດສະພາ 2021

2.2 ປະຫວັດຫຍໍ້ຂອງຄະນະອຳນວຍການ:



ທ່ານ ນາງ ສາຍສະໝອນ ຈັນທະຈັກ
ຜູ້ອຳນວຍການ

ຊີວະປະຫວັດຫຍໍ້:

ວັນ ເດືອນ ປີເກີດ: 15/03/1969

ສັນຊາດ : ລາວ

ພາສາ : ລາວ, ອັງກິດ

ຕຳແໜ່ງ : ຜູ້ອຳນວຍການ ທະນາຄານການຄ້າຕ່າງປະເທດລາວ ມະຫາຊົນ.

ປະຫວັດການສຶກສາ:

ທິດສະດີການເມືອງ: ຊັ້ນສູງ.

2007: ປະລິນຍາໂທ ສາຂາ ບໍລິຫານທຸລະກິດຕ່າງປະເທດ ຈາກປະເທດ ອົດສະຕາລີ (Flinders University, Australia);

1998: ປະລິນຍາໂທ ສາຂາ ບໍລິຫານລັດ ຈາກປະເທດ ຍີ່ປຸ່ນ (Saitama University, Japan);

1993: ປະລິນຍາໂທ ສາຂາ ເສດຖະກິດມະຫາພາກ ຈາກມະຫາວິທະຍາໄລ ກູບານ ປະເທດ ລັດເຊຍ (Kuban State University, Russia).

ປະຫວັດການເຮັດວຽກ:

08/2022 – ປັດຈຸບັນ: ຜູ້ອຳນວຍການ ທະນາຄານການຄ້າຕ່າງປະເທດລາວ ມະຫາຊົນ;

09/2021 – 08/2022: ຜູ້ອຳນວຍການໃຫຍ່, ຕະຫລາດຫລັກຊັບລາວ;

2015: ຫົວໜ້າສຳນັກງານ ຄະນະກຳມະການຄຸ້ມຄອງຫລັກຊັບ, ທະນາຄານ ແຫ່ງ ສປປ ລາວ;

04/2010: ຮອງຫົວໜ້າສຳນັກງານຄະນະກຳມະການຄຸ້ມຄອງຫລັກຊັບ, ທະນາຄານ ແຫ່ງ ສປປ ລາວ;

2009: ຮອງຫົວໜ້າກົມນະໂຍບາຍເງິນຕາ, ທະນາຄານ ແຫ່ງ ສປປ ລາວ;

1993 – 1997: ພະນັກງານກົມນະໂຍບາຍເງິນຕາ, ທະນາຄານ ແຫ່ງ ສປປ ລາວ.



ທ່ານ ນັນທະລາດ ແກ້ວປະເສີດ

ຮອງຜູ້ອຳນວຍການ

ຊີວະປະຫວັດຫຍໍ້:

ວັນ ເດືອນ ປີເກີດ : 16/08/1978

ສັນຊາດ : ລາວ

ພາສາ : ລາວ, ອັງກິດ ແລະ ຈີນ.

ຕຳແໜ່ງ : ຮອງຜູ້ອຳນວຍການ ທະນາຄານການຄ້າຕ່າງປະເທດລາວ ມະຫາຊົນ.

ປະຫວັດການສຶກສາ:

2008 – 2010: ຄົ້ນຄວ້າປະລິນຍາໂທ ດ້ານນະໂຍບາຍການຄ້າສາກົນ ຢູ່ປະເທດອາເມລິກາ;
2005 – 2006: ຊັ້ນສູງດ້ານການຄ້າລະຫວ່າງປະເທດ ທີ່ວິທະຍາໄລ ວິກຕໍເລຍ ປະເທດອົດສະຕາລີ;
2004: ກຽມພາສາອັງກິດຢູ່ວິທະຍາໄລວຽງຈັນຄູເລດ;
1996 – 2000: ສຶກສາຢູ່ມະຫາວິທະຍາໄລແຫ່ງຊາດ ຄະນະວິຊາ ພາສາອັງກິດ.

ປະຫວັດການເຮັດວຽກ:

2014 – ປະຈຸບັນ: ເປັນຮອງຜູ້ອຳນວຍການ ທະນາຄານການຄ້າຕ່າງປະເທດລາວ ມະຫາຊົນ;
2012 – 2014: ເປັນຫົວໜ້າສູນບໍລິການອີເລັກໂທຣນິກ ແລະ ຜະລິດຕະພັນບັດ;
2010 – 2012: ເປັນຮັກສາການຫົວໜ້າສູນບໍລິການອີເລັກໂທຣນິກ ແລະ ຜະລິດຕະພັນບັດ;
2003 – 2007: ເປັນວ່າການຮອງສູນບໍລິການອີເລັກໂທຣນິກ ແລະ ຜະລິດຕະພັນບັດ;
2001 – 2003: ເປັນວິຊາການພະແນກເງິນໂອນຕ່າງປະເທດ;
2001 – 2001: ເປັນພະນັກງານວິຊາການພະແນກບັນຊີ;
2000 – 2001: ເປັນພະນັກງານວິຊາການພະແນກເງິນຝາກ ທຄຕລ ສຳນັກງານໃຫຍ່.



ທ່ານ ກົງສັກ ສຸພອນສີ
ຮອງຜູ້ອຳນວຍການ

ຊີວະປະຫວັດຫຍໍ້:

ວັນ ເດືອນ ປີເກີດ : 12/11/1977

ສັນຊາດ : ລາວ

ພາສາ : ລາວ, ອັງກິດ

ຕຳແໜ່ງ : ຮອງຜູ້ອຳນວຍການ ທະນາຄານການຄ້າຕ່າງປະເທດລາວ ມະຫາຊົນ.

ປະຫວັດການສຶກສາ:

2021: ປະລິນຍາໂທ ບໍລິຫານການເງິນ ຈາກມະຫາວິທະຍາໄລແຫ່ງຊາດ;

2018: ຊັ້ນອານຸປະລິນຍາ ທິດສະດີການເມືອງ-ການປົກຄອງ ຈາກໂຮງຮຽນການເມືອງ-ການປົກຄອງ ນະຄອນຫລວງວຽງຈັນ.

ປະສົບການເຮັດວຽກ:

2021 – ປະຈຸບັນ : ເປັນຮອງຜູ້ອຳນວຍການ ທະນາຄານການຄ້າຕ່າງປະເທດລາວ ມະຫາຊົນ;
2018 – 2021: ເປັນຫົວໜ້າພະແນກກວດກາພາຍໃນ ທຄຕລ ສຳນັກງານໃຫຍ່;
2016-2018: ຮຽນທິດສະດີການເມືອງ-ການປົກຄອງ ຊັ້ນອານຸປະລິນຍາຢູ່ໂຮງຮຽນການເມືອງ - ການປົກຄອງ ນະຄອນຫລວງວຽງຈັນ;
2014 – 2016: ເປັນຫົວໜ້າ ທຄຕລ ສາຂາ ຫຼວງນ້ຳທາ;
2013 – 2014: ເປັນຫົວໜ້າ ທຄຕລ ສາຂາ ຫົວພັນ;
2010 – 2013: ວ່າການຫົວໜ້າ ທຄຕລ ສາຂາ ຫົວພັນ;
2008 – 2010: ຮອງຫົວໜ້າ ທຄຕລ ສາຂາ ອຸດົມໄຊ;
2007 – 2008: ເປັນຫົວໜ້າຂະແໜງບໍລິການ ທຄຕລ ສາຂາ ອຸດົມໄຊ;
2005 – 2007: ວ່າການຫົວຫນ້າຂະແໜງສິນເຊື່ອ ທຄຕລ ສາຂາ ອຸດົມໄຊ;
2001 – 2005: ພະນັກງານວິຊາການຂະແໜງສິນເຊື່ອ ທຄຕລ ສາຂາ ອຸດົມໄຊ;
2000 – 2001: ພະນັກງານວິຊາການຂະແໜງບໍລິການ ທຄຕລ ສາຂາ ອຸດົມໄຊ.



ທ່ານ ນາງ ບົວໄພອັນ ນັນດາວົງ
ຮອງຜູ້ອຳນວຍການ

ຊີວະປະຫວັດຫຍໍ້:

ວັນ ເດືອນ ປີເກີດ : 26/11/1971

ສັນຊາດ : ລາວ

ພາສາ : ລາວ, ອັງກິດ

ຕຳແໜ່ງ : ຮອງຜູ້ອຳນວຍການ ທະນາຄານການຄ້າຕ່າງປະເທດລາວ ມະຫາຊົນ.

ປະຫວັດການສຶກສາ:

2014: ປະລິນຍາໂທ ດ້ານຄຸ້ມຄອງເສດຖະກິດ ຢູ່ສະຖາບັນການເມືອງ-ການປົກຄອງແຫ່ງຊາດ.

ປະສົບການເຮັດວຽກ:

2021 – ປະຈຸບັນ: ເປັນຮອງຜູ້ອຳນວຍການ ທະນາຄານການຄ້າຕ່າງ ປະເທດລາວ ມະຫາຊົນ;
1/1/2019 – 2021: ເປັນຫົວໜ້າພະແນກຈັດຕັ້ງ-ພະນັກງານ ທຄຕລ ສຳນັກງານໃຫຍ່;
2018 – 2019: ເປັນວ່າການຫົວໜ້າພະແນກຈັດຕັ້ງ-ພະນັກງານ ທຄຕລ ສຳນັກງານໃຫຍ່;
2015 – 2018: ເປັນຮອງຫົວໜ້າພະແນກຈັດຕັ້ງ-ພະນັກງານ ທຄຕລ ສຳນັກງານໃຫຍ່;
2013 – 2015: ເປັນຮອງຫົວໜ້າ ທຄຕລ ສາຂານະຄອນຫຼວງວຽງຈັນ;
2011 – 2013: ເປັນຮອງຫົວໜ້າພະແນກຈັດຕັ້ງ-ພະນັກງານ ທຄຕລ ສຳນັກງານໃຫຍ່;
2009 – 2011: ເປັນວ່າການຮອງຫົວໜ້າພະແນກຈັດຕັ້ງ-ພະນັກງານ ທຄຕລ ສຳນັກງານໃຫຍ່;
1997 – 2009: ເປັນພະນັກງານວິຊາການພະແນກຈັດຕັ້ງ-ພະນັກງານ ທຄຕລ ສຳນັກງານໃຫຍ່;
1994 – 1997: ເປັນພະນັກງານວິຊາການພະແນກຫ້ອງການບໍລິຫານ-ການເງິນ ທຄຕລ;
1993 – 1994: ເປັນພະນັກງານວິຊາການໜ່ວຍບໍລິການຕະຫຼາດເຊົ້າ II ທຄຕລ.



ທ່ານ ສາຍຈິດ ສົມມະວົງ
ຮອງຜູ້ອຳນວຍການ

ຊີວະປະຫວັດຫຍໍ້:

ວັນ ເດືອນ ປີເກີດ : 11/02/1972

ສັນຊາດ : ລາວ

ພາສາ : ລາວ, ອັງກິດ ແລະ ຝຣັ່ງ

ຕຳແໜ່ງ : ຮອງຜູ້ອຳນວຍການ ທະນາຄານການຄ້າຕ່າງປະເທດລາວ ມະຫາຊົນ.

ປະຫວັດການສຶກສາ:

2014: ປະລິນຍາໂທ ສາຂາຄຸ້ມຄອງເສດຖາກິດ ຈາກສະຖາບັນການເມືອງ ແລະ ການປົກຄອງແຫ່ງຊາດ.

ປະສົບການເຮັດວຽກ:

2021 – ປະຈຸບັນ: ເປັນຮອງຜູ້ອຳນວຍການ ທະນາຄານການຄ້າຕ່າງ ປະເທດລາວ ມະຫາຊົນ;
08/01/2018: ເປັນຫົວໜ້າພະແນກຫ້ອງການ-ບໍລິຫານການເງິນ ທຄຕລ;
2014 – 2018: ອ່າການຫົວໜ້າພະແນກຫ້ອງການ-ບໍລິຫານການເງິນ ທຄຕລ;
2013 – 2014: ຮອງຫົວໜ້າພະແນກຫ້ອງການ-ບໍລິຫານການເງິນ ທຄຕລ;
2010 – 2013: ຫົວໜ້າຂະແໜງບໍລິຫານທົ່ວໄປ, ພະແນກຫ້ອງການ-ບໍລິຫານການເງິນ ທຄຕລ;
2007 – 2010: ອ່າການຫົວໜ້າຂະແໜງບໍລິຫານທົ່ວໄປ, ພະແນກຫ້ອງການ-ບໍລິຫານການເງິນ ທຄຕລ;
2000 – 2006: ຫົວໜ້າໜ່ວຍງານຮຽກເກັບແຊັກ, ພະແນກເງິນໂອນຕ່າງປະເທດ;
1999 – 2000: ຫົວໜ້າຫ້ອງແລກປ່ຽນ ຮຸ້ນສ່ວນສີຫອມ, ສູນບໍລິການ;
1998 – 1999: ຫົວໜ້າຫ້ອງແລກປ່ຽນຂ໋ອມິດຕະພາບ, ສູນບໍລິການ;
1995 – 1998: ພະນັກງານວິຊາການສູນບໍລິການ ທຄຕລ.

3. ການເຄື່ອນໄຫວຂອງສະພາບໍລິຫານ ແລະ ຄະນະກຳມະການທີ່ຂຶ້ນກັບສະພາບໍລິຫານ

3.1 ກອງປະຊຸມສະພາບໍລິຫານ

ໃນໄລຍະໄຕມາດ 1/2024 ສະພາບໍລິຫານ ທຄຕລ ໄດ້ດຳເນີນກອງປະຊຸມ 2 ຄັ້ງ (ສະໄໝສາມັນ 1 ຄັ້ງ ແລະ ວິສາມັນ 1 ຄັ້ງ) ເຊິ່ງໄດ້ຮັບຮອງບັນຫາທີ່ສຳຄັນຕ່າງໆ ດັ່ງນີ້:

- ຮັບຊາບລາຍງານການຈັດຕັ້ງປະຕິບັດວຽກງານກວດກາ ປີ 2023;
- ຮັບຊາບລາຍງານການຈັດຕັ້ງປະຕິບັດວຽກງານບັນຊີ ປີ 2023;
- ຮັບຊາບລາຍງານການຈັດຕັ້ງປະຕິບັດວຽກງານຄຸ້ມຄອງຄວາມສ່ຽງ ໄຕມາດ 1/2024;
- ຮັບຊາບລາຍງານຜົນການດຳເນີນທຸລະກິດ ຮອດທ້າຍເດືອນ 02/2024;
- ຮັບຮອງຜູ້ກວດສອບອິດສະຫຼະປະຈຳປີ 2024 ເພື່ອສະເໜີໃຫ້ກອງປະຊຸມຜູ້ຖືຮຸ້ນພິຈາລະນາຮັບຮອງ;
- ຮັບຮອງແບບ ແລະ ວິທີການປະເມີນສະພາບໍລິຫານ, ສະມາຊິກສະພາບໍລິຫານ ແລະ ບັນດາຄະນະກຳມະການຂອງສະພາບໍລິຫານ ປະຈຳປີ 2023 ແລະ 2024;
- ຮັບຮອງແຜນການຈັດກອງປະຊຸມສະພາບໍລິຫານ ແລະ ກອງປະຊຸມບັນດາຄະນະກຳມະການຂອງສະພາບໍລິຫານ ປະຈຳປີ 2024;
- ຮັບຮອງຜົນການດຳເນີນທຸລະກິດຂອງ ທຄຕລ ປະຈຳປີ 2023 ທີ່ຜ່ານການກວດສອບໂດຍຜູ້ກວດສອບອິດສະຫຼະ ເພື່ອນຳສະເໜີໃຫ້ກອງປະຊຸມຜູ້ຖືຮຸ້ນພິຈາລະນາຮັບຮອງ;
- ຮັບຮອງແຜນການດຳເນີນທຸລະກິດປະຈຳປີ 2024 ເພື່ອນຳສະເໜີໃຫ້ກອງປະຊຸມຜູ້ຖືຮຸ້ນພິຈາລະນາຮັບຮອງ;
- ຮັບຮອງການຈັດສັນກຳໄລສຸດທິ ປະຈຳປີ 2023 ເຂົ້າຄັງຕ່າງໆ ແລະ ເງິນປັນຜົນ ເພື່ອນຳສະເໜີໃຫ້ກອງປະຊຸມຜູ້ຖືຮຸ້ນພິຈາລະນາຮັບຮອງ;
- ຮັບຮອງການຈ່າຍເງິນປັນຜົນ ປະຈຳປີ 2023 ເພື່ອນຳສະເໜີໃຫ້ກອງປະຊຸມຜູ້ຖືຮຸ້ນພິຈາລະນາຮັບຮອງ ເຊິ່ງມີລາຍລະອຽດດັ່ງນີ້:
    - ຈຳນວນເງິນປັນຜົນ/ຮຸ້ນ: 300 ກີບ/ຮຸ້ນ;
    - ມື້ປິດປຶ້ມກຳນົດສິດຜູ້ຖືຮຸ້ນໃນການຮັບເງິນປັນຜົນ: 26/04/2024;
    - ມື້ຈ່າຍເງິນປັນຜົນ: 14/05/2024.
- ຮັບຮອງແຜນການຈັດກອງປະຊຸມສາມັນຜູ້ຖືຮຸ້ນ ປະຈຳປີ 2023 ເຊິ່ງກຳນົດລາຍລະອຽດດັ່ງນີ້:
    - ມື້ປິດປຶ້ມທະບຽນຜູ້ຖືຮຸ້ນ ເພື່ອເຂົ້າຮ່ວມກອງປະຊຸມ: 25/03/2024;
    - ມື້ເປີດກອງປະຊຸມຜູ້ຖືຮຸ້ນ: 29/04/2024, ເວລາ 14:30 ໂມງ;
    - ສະຖານທີ່: ໂຮງແຮມລາວພລາຊາ.
- ຮັບຮອງການແຕ່ງຕັ້ງ ແລະ ສັບຊ້ອນພະນັກງານ ຈຳນວນໜຶ່ງ;
- ຮັບຮອງການສະເໜີຂໍກູ້ຢືມທີ່ຂຶ້ນກັບສິດພິຈາລະນາຂອງສະພາບໍລິຫານ ຈຳນວນໜຶ່ງ.

3.2 ຄະນະກຳມະການຄຸ້ມຄອງຄວາມສ່ຽງ

ຄະນະກຳມະການ ໄດ້ເອົາໃຈໃສ່ໃຫ້ຄຳແນະນຳໃນການຄົ້ນຄວ້າ ແລະ ກຳນົດບັນດາລະບຽບການ ແລະ ນະໂຍບາຍດ້ານການຄຸ້ມຄອງຄວາມສ່ຽງ ຂອງ ທຄຕລ, ພ້ອມທັງໄດ້ພິຈາລະນາຮັບຮອງເອົາບັນດານະໂຍບາຍ ແລະ ກົດລະບຽບທີ່ຕິດພັນກັບວຽກງານຄຸ້ມຄອງຄວາມສ່ຽງ ແລະ ຕິດຕາມບັນດາໂຄງການບາເຊີ 2 ທີ່ ທຄຕລ ໄດ້ດຳເນີນມາແຕ່ປີ 2018. ຄະນະກຳມະການໄດ້ເປີດກອງປະຊຸມຂອງຕົນຂຶ້ນຢ່າງເປັນປົກກະຕິຕາມຮອບວຽນທີ່ໄດ້ກຳນົດໄວ້ໃນລະບຽບ. ໃນໄລຍະໄຕມາດ 1/2023 ຄະນະກຳມະການໄດ້ດຳເນີນກອງປະຊຸມ 1 ຄັ້ງ ເຊິ່ງໄດ້ປຶກສາຫາລື ແລະ ຮັບຮອງບາງເນື້ອໃນທີ່ສຳຄັນຄື: ຮັບຊາບການລາຍງານການຈັດຕັ້ງປະຕິບັດວຽກງານຄຸ້ມຄອງຄວາມສ່ຽງ ແລະ ການປະຕິບັດວຽກງານຕາມຫຼັກການບາເຊອ 2 ຂອງ ທຄຕລ ໃນໄຕມາດ 1/2024.

3.3 ຄະນະກຳມະການຄັດເລືອກ ແລະ ກຳນົດຄ່າຕອບແທນ

ຄະນະກຳມະການ ໄດ້ເອົາໃຈໃສ່ໃນການຄົ້ນຄວ້າພິຈາລະນາເປົ້າໝາຍບຸກຄະລາກອນສຳລັບການປັບປຸງຄະນະຜູ້ບໍລິຫານ ແລະ ສະພາບໍລິຫານຂອງ ທຄຕລ ໃນແຕ່ລະໄລຍະ ພ້ອມທັງຄົ້ນຄວ້າ ແລະ ຕິດຕາມການປະຕິບັດເງິນເດືອນ ແລະ ຄ່າຕອບແທນໃຫ້ແກ່ພະນັກງານ ແລະ ຜູ້ບໍລິຫານ ທຄຕລ ທຸກລະດັບໃຫ້ສອດຄ່ອງກັບນະໂຍບາຍທີ່ວາງໄວ້ ແນ່ໃສ່ຮັກສາຜົນປະໂຫຍດຂອງ ທຄຕລ ແລະ ຜູ້ຖືຮຸ້ນ. ນອກຈາກນັ້ນ, ຄະນະກຳມະການຍັງໄດ້ຄົ້ນຄວ້າບັນດາລະບຽບການຕ່າງໆ ເພື່ອໃຫ້ສາມາດນຳສະເໜີຮັບຮອງຜ່ານສະພາບໍລິຫານ ຕາມຂັ້ນຕອນ. ໃນໄຕມາດ 1/2024 ໄດ້ຮັບຮອງການແຕ່ງຕັ້ງ, ສັບຊ້ອນ ຕຳແໜ່ງງານ ຂັ້ນຄະນະພະແນກ, ສູນ ແລະ ສາຂາ ຈຳນວນໜຶ່ງ.

3.4 ຄະນະກຳມະການຄຸ້ມຄອງບໍລິຫານ

ຄະນະກຳມະການຄຸ້ມຄອງບໍລິຫານ ໄດ້ເອົາໃຈໃສ່ຕິດຕາມຊຸກຍູ້ໃຫ້ທິດຊີ້ນຳຕໍ່ຜົນການດຳເນີນທຸລະກິດຂອງ ທຄຕລ ເປັນປະຈຳ ຢ່າງໃກ້ຊິດ ໂດຍສະເພາະແມ່ນວຽກງານການຂະຫຍາຍສິນເຊື່ອ, ການເກັບກູ້ໜີ້ NPL ແລະ ວຽກງານການບໍລິຫານທຶນແຕ່ລະໄລຍະ; ພ້ອມທັງ ໄດ້ຕິດຕາມການຈັດຕັ້ງປະຕິບັດຜົນການດຳເນີນທຸລະກິດ, ແຜນດຳເນີນງານປະຈຳປີ, ແຜນຍຸດທະສາດໄລຍະຍາວ ແລະ ການປະຕິບັດແຜນງານ, ໂຄງການຕ່າງໆ; ຕິດຕາມວຽກງານການບໍລິຫານ ແລະ ການພັດທະນາບຸກຄະລາກອນ ຂອງ ທຄຕລ ຢ່າງໃກ້ຊິດ. ໃນໄຕມາດ 1/2024 ຄະນະກຳມະການໄດ້ເປີດກອງປະຊຸມ 1 ຄັ້ງ ເຊິ່ງໄດ້ຮັບຮອງບາງເນື້ອໃນທີ່ສຳຄັນ ຄື: ຮັບຊາບການລາຍງານຜົນການດຳເນີນທຸລະກິດຂອງ ທຄຕລ ໃນປີ 2023 ແລະ ໄລຍະຕົ້ນປີ 2024 ແລະ ທິດທາງແຜນການໃນປີ 2024.

3.5 ຄະນະກຳມະການກວດສອບ

ຄະນະກຳມະການກວດສອບ ໄດ້ເອົາໃຈໃສ່ໃນການຊີ້ນຳວຽກງານກວດສອບພາຍໃນ ຂອງ ທຄຕລ ແລະ ກຳນົດນະໂຍບາຍກ່ຽວກັບການກວດສອບພາຍໃນ, ພິຈາລະນານຳສະເໜີການແຕ່ງຕັ້ງຜູ້ກວດສອບອິດສະຫຼະ, ປະສານງານກັບຜູ້ກວດສອບພາຍນອກທີ່ມາຈາກຜູ້ຄຸ້ມຄອງແຕ່ລະພາກສ່ວນ ແລະ ອົງການລັດທີ່ກ່ຽວຂ້ອງ. ຄະນະກຳມະການຍັງໄດ້ເອົາໃຈໃສ່ຄົ້ນຄວ້າ ແລະ ຊີ້ນຳ ທຄຕລ ໃນການແກ້ໄຂບັນດາຂໍ້ພົບເຫັນ ຫຼື ຄຳແນະນຳຂອງຜູ້ກວດສອບ ເພື່ອປັບປຸງແຕ່ລະວຽກງານໃຫ້ດີຂຶ້ນຕາມຂໍ້ພົບເຫັນ ຫຼື ຄຳແນະນຳດັ່ງກ່າວ. ຊຸກຍູ້ໃຫ້ ທຄຕລ ປະຕິບັດຕາມຫຼັກການບັນຊີ ແລະ ການເຄື່ອນໄຫວໃຫ້ຢູ່ບົນພື້ນຖານລະບຽບຫຼັກການທີ່ກຳນົດໄວ້ ພ້ອມທັງໄດ້ຕິດຕາມວຽກງານການເປີດເຜີຍຂໍ້ມູນຢ່າງເປັນປົກກະຕິ ເພື່ອໃຫ້ສອດຄ່ອງກັບລະບຽບການເປີດເຜີຍຂໍ້ມູນທີ່ກຳນົດໄວ້. ຄະນະກຳມະການໄດ້ຈັດກອງປະຊຸມຂອງຕົນຂຶ້ນຢ່າງເປັນປົກກະຕິຕາມຮອບວຽນທີ່ໄດ້ກຳນົດໄວ້ໃນລະບຽບຂອງ ທຄຕລ ເຊິ່ງໃນໄຕມາດ 1/2024 ຄະນະກຳມະການໄດ້ເປີດກອງປະຊຸມ 1 ຄັ້ງ ເຊິ່ງໄດ້ຮັບຮອງບາງເນື້ອໃນສຳຄັນດັ່ງນີ້:

- ຮັບຮອງເອກະສານລາຍງານການເງິນປະຈຳປີ 2023 ທີ່ຜ່ານການທົບທວນຈາກຜູ້ກວດສອບອິດສະຫຼະ PWC ເພື່ອນຳສະເໜີຕໍ່ສະພາບໍລິຫານຮັບຮອງ;
- ຮັບຮອງການແຕ່ງຕັ້ງຜູ້ກວດສອບອິດສະຫຼະປະຈຳປີ 2024 ເພື່ອນຳສະເໜີຕໍ່ສະພາບໍລິຫານຮັບຮອງ;
- ໃນໄລຍະປີ 2023 ພະແນກກວດກາພາຍໃນໄດ້ກວດກາປົກກະຕິບັນດາພະແນກ, ສູນ, ສາຂາ, ຂະແໜງ ແລະ ໜ່ວຍບໍລິການ ທົ່ວລະບົບ ທຄຕລ ໄດ້ທັງໝົດ 161 ພາກສ່ວນ; ກວດກາສຸກເສີນ 313 ຄັ້ງ; ກວດກາຕາມທິດຊີ້ນຳ ແລະ ກວດກາສະເພາະດ້ານ ຈຳນວນ 07 ຄັ້ງ ແລະ ລົງທົບທວນວຽກງານກວດກາປະຈຳສາຂາທົ່ວລະບົບ 13 ສາຂາ.

V. ຄວາມຮັບຜິດຊອບໃນສັງຄົມ:

❖ ການມີສ່ວນຮ່ວມໃນວຽກງານສັງຄົມ ແລະ ອຸປະຖຳສັງຄົມ

ຄຽງຄູ່ກັບການດຳເນີນທຸລະກິດ ແລະ ປະຕິບັດວຽກງານດ້ານອື່ນໆ, ຄະນະຜູ້ບໍລິຫານ ແລະ ພະນັກງານ ຂອງ ທຄຕລ ທຸກຄົນ ລ້ວນແຕ່ໄດ້ເອົາໃຈໃສ່ໃນການປະກອບສ່ວນ ແລະ ມີສ່ວນຮ່ວມໃນໂຄງການຄວາມ ຮັບຜິດຊອບຕໍ່ສັງຄົມ (Corporate Social Responsibility ຫຼື CSR) ເຊິ່ງເປັນໜຶ່ງໃນບັນດາຄຸນຄ່າຫຼັກຂອງ ທຄຕລ ເຊິ່ງມີລາຍລະອຽດລຸ່ມນີ້:

ການນຳໃຊ້ທ່າແຮງທາງດ້ານເທັກໂນໂລຢີ ແລະ ຄວາມທັນສະໄໝຂອງ ທຄຕລ ໃນການພັດທະນາຜະລິດ ຕະພັນມາຮັບໃຊ້ສັງຄົມ ເຊັ່ນ: BCEL One Heart ເຊິ່ງເຮັດໜ້າທີ່ເປັນເຄື່ອງມື ແລະ ເປັນສື່ກາງໃນການຮັບບໍລິຈາກ ເງິນຊ່ວຍເຫຼືອສັງຄົມ ທີ່ອຳນວຍຄວາມສະດວກໃຫ້ທັງຜູ້ຂໍຮັບບໍລິຈາກ ແລະ ຜູ້ສະໜັກໃຈບໍລິຈາກ ເຊິ່ງໃນໄລຍະ 03 ເດືອນຕົ້ນປີ 2024 ມີຜູ້ຮ່ວມບໍລິຈາກຜ່ານ BCEL One Heart ທັງໝົດ 918 ຄັ້ງ, ເປັນຈຳນວນເງິນທັງໝົດ 41.91 ລ້ານກີບ.

ພ້ອມດຽວກັນນັ້ນ, ທຄຕລ ໄດ້ປະກອບສ່ວນຊຸກຍູ້ ແລະ ຊ່ວຍເຫຼືອສັງຄົມຜ່ານຫຼາຍຮູບການ ເປັນຕົ້ນແມ່ນ ການອຸປະຖຳວຽກງານການສຶກສາ ແລະ ກິລາ, ວຽກງານສາທາລະນະສຸກ, ຊ່ວຍເຫຼືອຜູ້ປະສົບໄພທຳມະຊາດ, ຊຸກຍູ້ ວັນບຸນສຳຄັນຕ່າງໆຂອງຊາດ ແລະ ອື່ນໆ ດ້ວຍການມອບເງິນສົດ, ວັດຖຸອຸປະກອນຕ່າງໆ ໃນໄລຍະ 03 ເດືອນປີ 2024 ມີຈຳນວນ 33 ລາຍການ ເປັນຈຳນວນເງິນທັງໝົດ 385 ລ້ານກີບ.

ຜູ້ອຳນວຍການ

ນັນທະລາດ ແກ້ວປະເສີດ

ທະນາຄານການຄ້າຕ່າງປະເທດລາວ ມະຫາຊົນ
BANQUE POUR LE COMMERCE EXTERIEUR LAO PUBLIC

ເອກະສານລາຍງານການເງິນ (ກ່ອນການກວດສອບ)

ສຳລັບໄລຍະສາມເດືອນຂອງໄຕມາດທີ I ທີ່ສິ້ນສຸດວັນທີ 31 ມີນາ 2024

ສາລະບານ **ໜ້າ**

ໃບລາຍງານຜົນການດຳເນີນງານ 1

ໃບລາຍງານຜົນການດຳເນີນງານສັງລວມ 2

ໃບລາຍງານຖານະການເງິນ 3

ໃບລາຍງານສ່ວນປ່ຽນແປງທຶນ 4

ໃບລາຍງານກະແສເງິນສົດ 5–6

ບົດອະທິບາຍຊ້ອນທ້າຍຂອງເອກະສານລາຍງານການເງິນ ໂດຍຫຍໍ້ 7–18

ທະນາຄານການຄ້າຕ່າງປະເທດລາວ ມະຫາຊົນ

ໃບລາຍງານຜົນການດຳເນີນງານ (ກ່ອນການກວດສອບ)
ສຳລັບໄລຍະສາມເດືອນຂອງໄຕມາດທີ I ທີ່ສິ້ນສຸດວັນທີ 31 ມີນາ 2024

	ບິດ ອະທິບາຍ	ສຳລັບໄລຍະສາມ ເດືອນຂອງໄຕມາດ ທີ I ທີ່ສິ້ນສຸດວັນທີ 31 ມີນາ 2024 ລ້ານກີບ	ສຳລັບໄລຍະສາມ ເດືອນຂອງໄຕມາດ ທີ I ທີ່ສິ້ນສຸດວັນທີ 31 ມີນາ 2023 ລ້ານກີບ
ລາຍຮັບດອກເບ້ຍ		1,319,764	791,583
ລາຍຈ່າຍດອກເບ້ຍ		(654,575)	(513,894)
ລາຍຮັບສຸດທິຈາກດອກເບ້ຍ	5	**665,189**	**277,689**
ລາຍຮັບຄ່າທຳນຽມ ແລະ ຄ່າບໍລິການ		210,466	147,310
ລາຍຈ່າຍຄ່າທຳນຽມ ແລະ ຄ່າບໍລິການ		(44,547)	(51,303)
ລາຍຮັບສຸດທິຈາກຄ່າທຳນຽມ ແລະ ຄ່າບໍລິການ	6	**165,919**	**96,007**
ກຳໄລ(ຂາດທຶນ)ສຸດທິ ຈາກການຊື້ຂາຍເງິນຕາຕ່າງປະເທດ-		109,141	52,624
ລາຍຮັບອື່ນໆຈາກການດຳເນີນງານ		152,490	81,532
ລາຍຮັບສຸດທິຈາກການດຳເນີນງານ		**1,092,738**	**507,852**
ລາຍຈ່າຍໃນການສູນເສຍຂອງເງິນໃຫ້ກູ້ຢືມແກ່ລູກຄ້າ		(772,990)	(214,125)
ການສູນເສຍຄ່າເສື່ອມມູນຄ່າຂອງການລົງທຶນການເງິນ		(1,534)	(384)
ລາຍຮັບສຸດທິຈາກການດຳເນີນງານ		**318,214**	**293,343**
ລາຍຈ່າຍບຸກຄະລາກອນ		(98,952)	(80,429)
ຄ່າຫຼ້ຍຫ້ຽນ ແລະ ຄ່າເສື່ອມມູນຄ່າ		(24,004)	(23,859)
ຄ່າຫຼ້ຍຫ້ຽນຂອງສິດນຳໃຊ້ຊັບສິນ		(2,192)	(2,200)
ລາຍຈ່າຍອື່ນໆໃນການດຳເນີນງານ	7	(94,844)	(51,227)
ລວມລາຍຈ່າຍໃນການດຳເນີນງານ		**(219,993)**	**(157,715)**
ສ່ວນແບ່ງກຳໄລ(ຂາດທຶນ)ໃນວິສາຫະກິດຂາຮຸ້ນ ແລະ ວິສາຫະກິດປະສົມ		18,362	7,061
ກຳໄລກ່ອນອາກອນ		**116,584**	**142,689**
ລາຍຈ່າຍອາກອນກຳໄລ		(6,401)	(16,495)
ກຳໄລສຸດທິພາຍໃນໄລຍະ		**110,182**	**126,194**
ກຳໄລຕໍ່ຮຸ້ນ (ກີບ)	8	**530**	**608**

ກະກຽມໂດຍ:

ທ່ານ ນ. ສຸດຖະໜອມ ແກ້ວລະຄອນ
ຫົວໜ້າພະແນກບັນຊີສັງລວມ

ອະນຸມັດໂດຍ:

ທ່ານ ວິທະຍາ ຈັນເທຣີ
ຮອງຫົວໜ້າພະແນກກວດກາພາຍໃນ

ອະນຸມັດໂດຍ:

ທ່ານ ສາຍຈິດ ສິມມະວົງ
ຮອງອຳນວຍການ

ນະຄອນຫລວງວຽງຈັນ, ສປປ ລາວ
ວັນທີ: 07 ພຶດສະພາ 2024

ບິດອະທິບາຍຊ້ອນທ້າຍເອກະສານລາຍງານການເງິນ ໜ້າທີ **7** ຫາ **18** ແມ່ນຖືເປັນພາກສ່ວນໜຶ່ງຂອງເອກະສານລາຍງານການເງິນເຫຼົ່ານີ້.

ທະນາຄານການຄ້າຕ່າງປະເທດລາວ ມະຫາຊົນ

ໃບລາຍງານຜົນການດຳເນີນງານສັງລວມ (ກ່ອນການກວດສອບ)
ສຳລັບໄລຍະສາມເດືອນຂອງໄຕມາດທີ I ທີ່ສິ້ນສຸດວັນທີ 31 ມີນາ 2024

	ສຳລັບໄລຍະສາມ ເດືອນຂອງໄຕມາດທີ I ທີ່ສິ້ນສຸດວັນທີ 31 ມີນາ 2024 ລ້ານກີບ	ສຳລັບໄລຍະສາມ ເດືອນຂອງໄຕມາດທີ I ທີ່ສິ້ນສຸດວັນທີ 31 ມີນາ 2023 ລ້ານກີບ
ກຳໄລສຸດທິພາຍໃນໄລຍະ	**110,182**	**126,194**
ລາຍຮັບຜົນການດຳເນີນງານສັງລວມ		
ການສູນເສຍການປະເມີນຄືນຜົນປະໂຫຍດພະນັກງານຫຼັງອອກການທີ່ກຳນົດໄວ້	(12,335)	(455)
ການປ່ຽນແປງໃນມູນຄ່າຍຸດຕິທຳຂອງການລົງທຶນທາງການເງິນ-ປະເພດມີໄວ້ເພື່ອຂາຍ	2,467	91
ລາຍຮັບ(ລາຍຈ່າຍ) ພາຍໃນໄລຍະ, ສຸດທິຈາກອາກອນ	**(9,868)**	**(364)**
ລວມລາຍຮັບອື່ນ ພາຍໃນໄລຍະ, ສຸດທິຈາກອາກອນ	**100,315**	**125,830**

ກະກຽມໂດຍ:

ທ່ານ ນ. ສຸດຖະໜອມ ແກ້ວລະຄອນ
ຫົວໜ້າພະແນກບັນຊີສັງລວມ

ອະນຸມັດໂດຍ:

ທ່ານ ວິທະຍາ ຈັນເທຣີ
ຮອງຫົວໜ້າພະແນກກວດກາພາຍໃນ

ອະນຸມັດໂດຍ:

ທ່ານ ສາຍຈິດ ສິມມະວົງ
ຮອງອຳນວຍການ

ນະຄອນຫລວງວຽງຈັນ, ສປປ ລາວ
ວັນທີ: 07 ພຶດສະພາ 2024

ທະນາຄານການຄ້າຕ່າງປະເທດລາວ ມະຫາຊົນ

ໃບລາຍງານຖານະການເງິນ (ກ່ອນການກວດສອບ)
ສຳລັບໄລຍະສາມເດືອນຂອງໄຕມາດທີ I ທີ່ສິ້ນສຸດວັນທີ 31 ມີນາ 2024

	ບິດ ອະທິບາຍ	31 ມີນາ 2024 ລ້ານກີບ	31 ທັນວາ 2023 ລ້ານກີບ
ຊັບສິນ			
ເງິນສົດ ແລະ ເງິນຝາກຢູ່ທະນາຄານແຫ່ງ ສປປ ລາວ		33,580,960	31,684,143
ເງິນຝາກຢູ່ທະນາຄານອື່ນ	9	24,455,080	21,964,355
ເງິນໃຫ້ກູ້ຢືມແກ່ລູກຄ້າ	10	51,653,500	53,892,356
ການລົງທຶນທາງການເງິນ – ປະເພດມີໄວ້ເພື່ອຂາຍ	11	86,288	87,822
ການລົງທຶນທາງການເງິນ – ປະເພດຖືໄວ້ຈົນຄົບກຳນົດ	12	24,291,798	14,865,690
ການລົງທຶນໃນວິສາຫະກິດຂາຮຸ້ນ ແລະ ວິສາຫະກິດປະສົມ	13	765,585	747,223
ຊັບສິນບັດຄົງທີ່ ແລະ ອຸປະກອນ	14	597,185	568,104
ຊັບສິນບັດຄົງທີ່ບໍ່ມີຕົວຕົນ	15	323,304	321,734
ສິດໃນການນຳໃຊ້ຊັບສິນ		52,684	53,500
ອາກອນຊັບສິນເຍື່ອນຊຳລະ		124,073	102,813
ຊັບສິນອື່ນໆ		2,279,533	2,146,019
ລວມຊັບສິນ		**138,209,990**	**126,433,759**
ໜີ້ສິນ ແລະ ທຶນ			
ໜີ້ສິນ			
ໜີ້ຕ້ອງສົ່ງທະນາຄານ ແລະ ສະຖາບັນການເງິນອື່ນໆ	16	11,233,498	9,463,117
ໜີ້ຕ້ອງສົ່ງໃຫ້ລູກຄ້າ	17	119,041,793	109,471,717
ເງິນກູ້ຢືມຈາກທະນາຄານອື່ນ	18	4,494,357	4,378,394
ໜີ້ຕ້ອງສົ່ງອາກອນພາຍໃນປີ		43,785	27,454
ໜີ້ຕ້ອງສົ່ງສັນຍາເຊົ່າ		30,621	29,285
ໜີ້ສິນອື່ນໆ		687,957	486,128
ລວມໜີ້ສິນ		**135,532,011**	**123,856,095**
ທຶນ			
ທຶນຈົດທະບຽນ	19	1,038,617	1,038,617
ຄັງສະສົມຕາມລະບຽບການ	20	911,701	911,701
ລາຍການສ່ວນລວມອື່ນໆ		8,239	18,107
ກຳໄລສະສົມ		719,422	609,239
ລວມທຶນ		**2,677,979**	**2,577,664**
ລວມໜີ້ສິນ ແລະ ທຶນ		**138,209,990**	**126,433,759**

ກະກຽມໂດຍ:

ທ່ານ ນ. ສຸດຖະໜອມ ແກ້ວລະຄອນ
ຫົວໜ້າພະແນກບັນຊີສ່ວນລວມ

ອະນຸມັດໂດຍ:

ທ່ານ ວິທະຍາ ຈັນເທຣີ
ຮອງຫົວໜ້າພະແນກກວດກາພາຍໃນ

ອະນຸມັດໂດຍ:

ທ່ານ ສາຍຈິດ ສົມມະວົງ
ຮອງອຳນວຍການ

ນະຄອນຫລວງວຽງຈັນ, ສປປ ລາວ
ວັນທີ: 07 ພຶດສະພາ 2024

ບິດອະທິບາຍຊ້ອນທ້າຍເອກະສານລາຍງານການເງິນ ໜ້າທີ **7** ຫາ **18** ແມ່ນຖືເປັນພາກສ່ວນໜຶ່ງຂອງເອກະສານລາຍງານການເງິນ ເຫຼົ່ານີ້.

ທະນາຄານການຄ້າຕ່າງປະເທດລາວ ມະຫາຊົນ

ໃບລາຍງານສ່ວນປ່ຽນແປງທຶນ (ກ່ອນການກວດສອບ)
ສຳລັບໄລຍະສາມເດືອນຂອງໄຕມາດທີ I ທີ່ສິ້ນສຸດວັນທີ 31 ມີນາ 2024

	ທຶນຈົດທະບຽນ ລ້ານກີບ	ຄ້ຳສະສົມຕາມລະບຽບການ ລ້ານກີບ	ການປະເມີນຄືນຜົນປະໂຫຍດພະນັກງານຫຼັງອອກການທີ່ກຳນົດໄວ້ ລ້ານກີບ	ກຳໄລສະສົມ ລ້ານກີບ	ລວມ ລ້ານກີບ
ຍອດເຫຼືອໃນວັນທີ 31 ທັນວາ 2023	**1,038,617**	**911,701**	**18,107**	**609,239**	**2,577,664**
ກຳໄລສຸດທິພາຍໃນໄລຍະ	–	–	–	110,183	110,183
ການປະເມີນຄືນຜົນປະໂຫຍດພະນັກງານຫຼັງອອກການທີ່ກຳນົດໄວ້	–	–	(12,335)	-	(12,335)
ອາກອນກຳໄລທີ່ກ່ຽວຂ້ອງກັບອົງປະກອບລາຍຮັບສັງລວມອື່ນໆ	–	–	2,467	-	2,467
ຍອດເຫຼືອໃນວັນທີ 31 ມີນາ 2024	**1,038,617**	**911,701**	**8,239**	**719,422**	**2,677,979**

ກະກຽມໂດຍ:

ທ່ານ ນ. ສຸດຖະໜອມ ແກ້ວລະຄອນ
ຫົວໜ້າພະແນກບັນຊີສັງລວມ

ອະນຸມັດໂດຍ:

ທ່ານ ວິທະຍາ ຈັນເທຣີ
ຮອງຫົວໜ້າພະແນກກວດກາພາຍໃນ

ອະນຸມັດໂດຍ:

ທ່ານ ສາຍຈິດ ສິມມະວົງ
ຮອງອຳນວຍການ

ນະຄອນຫລວງວຽງຈັນ, ສປປ ລາວ
ວັນທີ: 07 ພຶດສະພາ 2024

ບົດອະທິບາຍຊ້ອນທ້າຍເອກະສານລາຍງານການເງິນ ໜ້າທີ **7** ຫາ **18** ແມ່ນຖືເປັນພາກສ່ວນໜຶ່ງຂອງເອກະສານລາຍງານການເງິນ ເຫຼົ່ານີ້.

ໃບລາຍງານກະແສເງິນສົດ (ກ່ອນການກວດສອບ)
ສຳລັບໄລຍະສາມເດືອນຂອງໄຕມາດທີ I ທີ່ສິ້ນສຸດວັນທີ 31 ມີນາ 2024

	ບົດອະທິບາຍ	ສຳລັບໄລຍະສາມເດືອນຂອງໄຕມາດທີ I ທີ່ສິ້ນສຸດວັນທີ 31 ມີນາ 2024 ລ້ານກີບ	ສຳລັບໄລຍະສາມເດືອນຂອງໄຕມາດທີ I ທີ່ສິ້ນສຸດວັນທີ 31 ມີນາ 2023 ລ້ານກີບ
ກິດຈະກຳການດຳເນີນງານ			
ກຳໄລກ່ອນຫັກອາກອນ		**116,585**	**142,689**
ດັດແກ້ສຳລັບ:			
ລາຍຈ່າຍຄ່າຫລຸ້ຍຫ້ຽນ ແລະ ຄ່າເສື່ອມມູນຄ່າ	14,15	18,498	23,860
ຄ່າຫຼ້ຍຫ້ຽນສິດຂອງການໃຊ້ຊັບສິນ		2,192	2,200
ລາຍຈ່າຍຄ່າເສື່ອມມູນຄ່າ	10	772,990	214,125
ສ່ວນແບ່ງກຳໄລແລະຂາດທຶນໃນວິສາຫະກິດຂາຮຸ້ນ ແລະ ວິສາຫະກິດປະສົມ	13	(18,362)	(7,061)
ລາຍຈ່າຍຜົນປະໂຫຍດພະນັກງານຫຼັງອອກການທີ່ກຳນົດໄວ້		15,775	17,368
ສ່ວນປ່ຽນແປງຄັ່ງແຮເພື່ອການສູນເສຍຂອງຫຼັກຊັບລົງທຶນ		1,534	384
ຂາດທຶນຈາກອັດຕາແລກປ່ຽນທີ່ຍັງບໍ່ໄດ້ເກີດຂຶ້ນຈິງ		126,286	(80,962)
ຂາດທຶນຈາກການຂາຍແລະຊຳລະສະສາງ		3	169
ລາຍຮັບດອກເບ້ຍ		(1,319,764)	(791,583)
ລາຍຈ່າຍດອກເບ້ຍ		654,575	513,894
ກະແສເງິນສົດຈາກ ກຳໄລຈາກການດຳເນີນງານກ່ອນການປ່ຽນແປງດ້ານຊັບສິນ ແລະ ໜີ້ສິນ		**370,311**	**35,083**
ສ່ວນປ່ຽນແປງໃນຊັບສິນຈາກການດຳເນີນງານ			
ສ່ວນປ່ຽນແປງເງິນຝາກຢູ່ທະນາຄານອື່ນສຸດທິ		1,435,767	(3,743,410)
ສ່ວນປ່ຽນແປງເງິນໃຫ້ກູ້ຢືມແກ່ລູກຄ້າສຸດທິ		(5,500,423)	93,484
ສ່ວນປ່ຽນແປງໃນຊັບສິນອື່ນໆ		259,780	(796,366)
ສ່ວນປ່ຽນແປງໃນໜີ້ສິນຈາກການດຳເນີນງານ			
ສ່ວນປ່ຽນແປງໃນໜີ້ຕ້ອງສົ່ງທະນາຄານ ແລະ ສະຖາບັນການເງິນອື່ນໆສຸດທິ		1,795,002	173,205
ສ່ວນປ່ຽນແປງໃນໜີ້ຕ້ອງສົ່ງໃຫ້ລູກຄ້າສຸດທິ		9,372,269	4,664,630
ສ່ວນປ່ຽນແປງໃນເງິນກູ້ຢືມຈາກທະນາຄານອື່ນສຸດທິ		4,100	-
ສ່ວນປ່ຽນແປງໃນໜີ້ສິນອື່ນໆສຸດທິ		171,516	40,930
ດອກເບ້ຍທີ່ໄດ້ຮັບ		4,005,048	1,018,689
ດອກເບ້ຍທີ່ໄດ້ຈ່າຍ		(679,847)	(497,117)
ອາກອນທີ່ໄດ້ຊຳລະພາຍໃນໄລຍະ		(8,864)	(5,720)
ກະແສເງິນສົດສຸດທິຈາກກິດຈະກຳການດຳເນີນງານ		**11,224,659**	**983,408**
ກິດຈະກຳການລົງທຶນ			
ຊື້ ແລະ ກໍ່ສ້າງຊັບສິນບັດຄົງທີ່		(43,211)	(9,957)
ຊື້ຊັບສິນຄົງທີ່ບໍ່ມີຕົວຕົນ		(4,910)	(759)
ຮັບເງິນຈາກການຂາຍຊັບສິນບັດຄົງທີ່		8,238	6,175
ຊື້ສິດການນຳໃຊ້		(2,752)	(12,192)
ເງິນປັນຜົນຮັບຈາກວິສາຫະກິດຂາຮຸ້ນ ແລະ ວິສາຫະກິດປະສົມ		-	1,773
ຈ່າຍເງິນລົງທຶນທາງການເງິນ-ປະເພດຖືໄວ້ຈົນຄົບກຳນົດ		(5,486,230)	-

ໃບລາຍງານກະແສເງິນສົດ (ກ່ອນການກວດສອບ)
ສຳລັບໄລຍະສາມເດືອນຂອງໄຕມາດທີ I ທີ່ສິ້ນສຸດວັນທີ 31 ມີນາ 2024

		ສຳລັບໄລຍະສາມເດືອນຂອງໄຕມາດທີ I ທີ່ສິ້ນສຸດວັນທີ 31 ມີນາ 2024 ລ້ານກີບ	ສຳລັບໄລຍະສາມເດືອນຂອງໄຕມາດທີ I ທີ່ສິ້ນສຸດວັນທີ 31 ມີນາ 2023 ລ້ານກີບ
	(ປັບປຸງຄືນ) ບິດອະທິບາຍ		
ກິດຈະກຳການລົງທຶນ (ຕໍ່)			
ຮັບເງິນຈາກເງິນລົງທຶນໃນການລົງທຶນທາງການເງິນ - ປະເພດຖືໄວ້ຈົນຄົບກຳນົດ		-	415,980
ກະແສເງິນສົດສຸດທິທີ່ໄດ້ນຳໃຊ້ໃນກິດຈະກຳການລົງທຶນ		**(5,528,865)**	**401,020**
ກິດຈະກຳທາງການເງິນ			
ຈ່າຍເງິນສຳລັບການຊຳລະສັນຍາເຊົ່າ		(2,650)	(14,222)
ກະແສເງິນສົດສຸດທິນຳໃຊ້ໃນກິດຈະກຳທາງການເງິນ		**(2,650)**	**(14,222)**
ປ່ຽນແປງສຸດທິ ຂອງເງິນສົດ ແລະ ທຽບເທົ່າເງິນສົດ		**5,693,144**	**1,370,205**
ເງິນສົດ ແລະ ທຽບເທົ່າເງິນສົດຕົ້ນໄລຍະ		**37,593,145**	**35,715,071**
ເງິນສົດ ແລະ ທຽບເທົ່າເງິນສົດທ້າຍໄລຍະ	21	**43,286,289**	**37,085,276**

ກະກຽມໂດຍ:

ທ່ານ ນ. ສຸດຖະໜອມ ແກ້ວລະຄອນ
ຫົວໜ້າພະແນກບັນຊີສັງລວມ

ອະນຸມັດໂດຍ:

ທ່ານ ວິທະຍາ ຈັນເທຣີ
ຮອງຫົວໜ້າພະແນກກວດກາພາຍໃນ

ອະນຸມັດໂດຍ:

ທ່ານ ສາຍຈິດ ສິມມະວົງ
ຮອງອຳນວຍການ

ນະຄອນຫຼວງວຽງຈັນ, ສປປ ລາວ.
ວັນທີ: 07 ພຶດສະພາ 2024

ບິດອະທິບາຍຊ້ອນທ້າຍເອກະສານລາຍງານການເງິນ ໜ້າທີ **7** ຫາ **18** ແມ່ນຖືເປັນພາກສ່ວນໜຶ່ງຂອງເອກະສານລາຍງານການເງິນ ເຫຼົ່ານີ້.

ບົດອະທິບາຍຊ້ອນທ້າຍຂອງເອກະສານລາຍງານການເງິນ ໂດຍຫຍໍ້ (ກ່ອນການກວດສອບ)
ໃນວັນທີ ແລະ ໄລຍະສາມເດືອນຂອງໄຕມາດທີ I ທີ່ສິ້ນສຸດວັນທີ 31 ມີນາ 2024

1. ຂໍ້ມູນກ່ຽວກັບທະນາຄານ

ທະນາຄານການຄ້າຕ່າງປະເທດລາວ ມະຫາຊົນ (ທະນາຄານ) ແມ່ນທະນາຄານມະຫາຊົນ ທີ່ຈົດທະບຽນໃນຕະຫຼາດຫຼັກຊັບໃນ ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ (LSX).

ທະນາຄານ ໄດ້ສ້າງຕັ້ງ ແລະ ມີພູມລຳເນົາຢູ່ໃນ ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ ແລະ ມີລາຍລະອຽດກ່ຽວກັບ ທະນາຄານດັ່ງລຸ່ມນີ້:

ສຳນັກງານໃຫຍ່ຂອງທະນາຄານ ຕັ້ງຢູ່ເລກທີ 01, ຖະໜົນປາງຄຳ, ບ້ານຊຽງຍືນ, ເມືອງຈັນທະບຸລີ, ນະຄອນຫຼວງວຽງຈັນ. ໃນວັນທີ 31 ມີນາ 2024, ທະນາຄານມີໜຶ່ງ (1) ສຳນັກງານໃຫຍ່, ຫົກ (6) ວິສາຫະກິດຂາຮຸ້ນ ແລະ ວິສາຫະກິດປະສົມ, ຊາວ (20) ສາຂາຫຼັກ, ເກົ້າສິບເກົ້າ (99) ໜ່ວຍບໍລິການ ແລະ ສິບສອງ (12) ຫ້ອງແລກປ່ຽນເງິນຕາທົ່ວ ສປປ ລາວ.

ກິດຈະກຳຫຼັກຂອງທະນາຄານ ເພື່ອສະໜອງການບໍລິການດ້ານທະນາຄານປະກອບມີ:

- ການລະດົມທຶນ ແລະ ຮັບເງິນຝາກຈາກ ອົງກອນ ແລະ ບຸກຄົນ
- ປ່ອຍເງິນໃຫ້ກູ້ຢືມແກ່ ອົງກອນ ແລະ ບຸກຄົນ
- ບໍລິການແລກປ່ຽນເງິນຕາຕ່າງປະເທດ
- ການບໍລິການການຄ້າລະຫວ່າງປະເທດ
- ສ່ວນຫຼຸດຂອງເອກະສານທາງດ້ານການຄ້າ
- ພັນທະບັດ ແລະ ເອກະສານທີ່ມີມູນຄ່າອື່ນໆ

ໂຄງສ້າງການຖືຮຸ້ນຂອງທະນາຄານ ໃນວັນທີ 31 ມີນາ 2024 ມີດັ່ງລຸ່ມນີ້:

ຜູ້ຖືຮຸ້ນ	**ຈຳນວນຮຸ້ນ**	***%***
ລັດຖະບານ	124,634,021	60
ຄູ່ຮ່ວມຮຸ້ນທາງຍຸດທະສາດ	20,772,359	10
ນັກລົງທຶນພາຍໃນ (ລວມທັງພະນັກງານຂອງທະນາຄານ) ແລະ ນັກລົງທຶນຕ່າງປະເທດ	62,316,920	30
	207,723,300	**100**

ເອກະສານລາຍງານການເງິນ ແມ່ນຖືກນຳສະເໜີ ເປັນສະກຸນເງິນກີບ ແລະ ປັດໃຫ້ເປັນເລກຖ້ວນ, ເວັ້ນເສຍແຕ່ໄດ້ລະບຸໄວ້ເປັນ ຢ່າງອື່ນ.

ເອກະສານລາຍງານການເງິນ ສະບັບນີ້ໄດ້ຮັບການຮັບຮອງຈາກ ຄະນະຜູ້ບໍລິຫານ ທຄຕລ ໃນວັນທີ: 07 ພຶດສະພາ 2024

2. ເຫດການສຳຄັນຕ່າງໆທີ່ເກີດຂຶ້ນໃນໄລຍະ

ທະນາຄານແຫ່ງ ສປປ ລາວໄດ້ປະກາດນະໂຍບາຍເພື່ອແກ້ໄຂຜົນກະທົບຈາກການລະບາດຂອງພະຍາດໂຄວິດ-19 ເຊັ່ນວ່າໄດ້ຍົກເວັ້ນການປະຕິບັດຕາມກົດລະບຽບສະບັບເລກທີ: 512/ທຫລ ສຳ ລັບທະນາຄານທຸລະກິດ ແລະ ສະຖາບັນການເງິນ, ລົງວັນທີ 29 ມິຖຸນາ 2018. ນີ້ໝາຍຄວາມວ່າຫຼັງຈາກປັບປຸງໂຄງສ້າງຂອງໃຫ້ກູ້ແລ້ວ, ທາງທະນະຄານສາມາດຈັດປະເພດລູກຄ້າເຫຼົ່ານີ້ເປັນກຸ່ມຕາມແບບເດີມກ່ອນປັບປຸງໂຄງສ້າງໃໝ່. ການຍົກເວັ້ນດັ່ງກ່າວຍັງອະນຸຍາດໃຫ້ທະນາຄານທຸລະກິດປັບໂຄງສ້າງເງິນກູ້ທີ່ຖືກຈັດປະເພດ 'ເປັນເງິນກູ້ທີ່ບໍ່ເກີດເປັນລາຍໄດ້' ຫຼາຍກວ່າສອງຄັ້ງ ແລະ ປ່ອຍເງິນກູ້ໃຫ້ແກ່ລູກຄ້າທີ່ໄດ້ຮັບຜົນກະທົບຈາກພະຍາດ COVID–19.

ແນວທາງຂອງການຮັບມື, ທະນາຄານໄດ້ ສືບຕໍ່ປະຕິບັດນຳໃຊ້ຕາມແຈ້ງການຂອງທະນາຄານແຫ່ງ ສປປ ລາວ ເຊັ່ນ: ການປັບໂຄງສ້າງເງິນກູ້ ແລະ ການຕິດຕາມຢ່າງໃກ້ຊິດກັບລູກຄ້າທີ່ໄດ້ຮັບຜົນກະທົບຈາກ COVID–19 ເຊິ່ງອາດຈະມີຜົນກະທົບຕໍ່ກັບຄັງເງິນກູ້ຂອງທະນະຄານ.

3. ພື້ນຖານການບັນຊີ

ເອກະສານລາຍງານການເງິນ ໄດ້ຖືກສ້າງຂຶ້ນເພື່ອໃຫ້ສອດຄ່ອງກັບນະໂຍບາຍການບັນຊີຂອງທະນາຄານ ຕາມທີ່ໄດ້ກຳນົດໄວ້ໃນເອກະສານລາຍງານການເງິນປະຈຳປີ ສຳລັບປີສິ້ນສຸດວັນທີ 31 ທັນວາ 2023. ເອກະສານລາຍງານການເງິນເບື້ອງຕົ້ນນີ້ (ໃບລາຍງານຖານະການເງິນ, ໃບລາຍງານຜົນໄດ້ຮັບ, ໃບລາຍງານຜົນໄດ້ຮັບສັງລວມ, ໃບລາຍງານກະແສເງິນສົດ ແລະ ໃບລາຍງານສ່ວນປ່ຽນແປງທຶນ) ແມ່ນໄດ້ນຳສະເໜີໃນຮູບແບບທີ່ສອດຄ່ອງກັບເອກະສານລາຍງານການເງິນປະຈຳໂດຍປະຕິບັດຕາມ ກົດລະບຽບການລາຍງານ ແລະ ການເປີດເຜີຍທີ່ອອກໂດຍ ສຳນັກງານຄະນະກຳມະການຄຸ້ມຄອງຫຼັກຊັບ (LSCO).

ເອກະສານລາຍງານການເງິນ ຄວນຈະອ່ານຄວບຄູ່ກັບເອກະສານລາຍງານການເງິນປະຈຳປີ 2023 ແລະ ປະຈຳ 03 ເດືອນ ຕົ້ນປີ 2023.

ໃນການກະກຽມເອກະສານລາຍງານການເງິນນັ້ນ ຮຽກຮ້ອງໃຫ້ຜູ້ບໍລິຫານຕ້ອງໃຊ້ດຸນພິນິດໃນການຄາດຄະເນ ແລະ ຕັ້ງຂໍ້ສົມມຸດຖານທີ່ມີຜົນກະທົບຕໍ່ຊັບສິນ ແລະ ໜີ້ສິນທີ່ຖືກລາຍງານ, ການເປີດເຜີຍຊັບສິນ ແລະ ໜີ້ສິນທີ່ອາດເກີດຂຶ້ນໃນວັນທີຂອງເອກະສານການເງິນ ແລະ ລາຍຮັບ ແລະ ລາຍຈ່າຍໃນໄລຍະຂອງການລາຍງານ. ເຖິງແມ່ນວ່າການຄາດຄະເນເຫຼົ່ານີ້ແມ່ນອີງໃສ່ຄວາມຮູ້ທີ່ດີທີ່ສຸດຂອງຜູ້ບໍລິຫານກ່ຽວກັບເຫດການ ແລະ ການປະຕິບັດໃນປະຈຸບັນກໍ່ຕາມ, ແຕ່ຜົນໄດ້ຮັບຕົວຈິງອາດຈະແຕກຕ່າງຈາກການຄາດຄະເນ.

4. ນະໂຍບາຍການບັນຊີ

ນະໂຍບາຍບັນຊີທີ່ນຳໃຊ້ໃນການກະກຽມເອກະສານລາຍງານການເງິນແມ່ນສອດຄ່ອງກັບຂໍ້ມູນທີ່ນຳໃຊ້ເຂົ້າໃນເອກະສານລາຍງານການເງິນປະຈຳປີ ສຳລັບປີທີ່ສິ້ນສຸດວັນທີ 31 ທັນວາ 2023.

5. ລາຍຮັບສຸດທິຈາກດອກເບ້ຍ

	ສຳລັບໄລຍະສາມເດືອນຂອງໄຕມາດທີ I ທີ່ສິ້ນສຸດວັນທີ 31 ມີນາ 2024 ລ້ານກີບ	ສຳລັບໄລຍະສາມເດືອນຂອງໄຕມາດທີ I ທີ່ສິ້ນສຸດວັນທີ 31 ມີນາ 2023 ລ້ານກີບ
ລາຍຮັບດອກເບ້ຍ:		
ການໃຫ້ກູ້ຢືມ	824,695	651,748
ເງິນຝາກຢູ່ທະນາຄານອື່ນ	257,392	68,736
ການລົງທຶນທາງການເງິນ - ປະເພດຖືໄວ້ຈົນຄົບກຳນົດ	237.676	71,099
ລາຍຮັບດອກເບ້ຍ ແລະ ລາຍຮັບທີ່ຄ້າຍຄືກັນອື່ນໆ	-	-
	1,319,764	**791,583**
ລາຍຈ່າຍດອກເບ້ຍ:		
ເງິນຝາກຂອງທະນາຄານອື່ນ	(71,964)	(57,353)
ເງິນຝາກຂອງລູກຄ້າ	(582,610)	(456,541)
	(654,575)	**(513,894)**
ລາຍຮັບສຸດທິຈາກດອກເບ້ຍ	**665,189**	**277,689**

6. ລາຍຮັບສຸດທິຈາກຄ່າທຳນຽມ ແລະ ຄ່າບໍລິການ

	ສຳລັບໄລຍະສາມເດືອນຂອງໄຕມາດທີ I ທີ່ສິ້ນສຸດວັນທີ 31 ມີນາ 2024 ລ້ານກີບ	ສຳລັບໄລຍະສາມເດືອນຂອງໄຕມາດທີ I ທີ່ສິ້ນສຸດວັນທີ 31 ມີນາ 2023 ລ້ານກີບ
ລາຍຮັບຄ່າທຳນຽມ ແລະ ຄ່າບໍລິການຈາກ:		
ບໍລິການຊຳລະສະສາງ	181,860	125,388
ທຸລະກຳທາງດ້ານສິນເຊື່ອ	2,684	879
ທຸລະກຳທາງອື່ນໆ	25,922	21,043
	210,466	**125,388**
ລາຍຈ່າຍຄ່າທຳນຽມ ແລະ ຄ່າບໍລິການສຳລັບ:		
ບໍລິການຊຳລະສະສາງ	(40,450)	(24,361)
ທຸລະກຳທາງອື່ນໆ	(4,096)	(26,942)
	(44,547)	**(51,303)**
ລາຍຮັບສຸດທິຈາກຄ່າທຳນຽມ ແລະ ຄ່າບໍລິການ	**165,919**	**96,007**

7. ລາຍຈ່າຍອື່ນໆຈາກການດຳເນີນງານ

	ສຳລັບໄລຍະສາມເດືອນຂອງໄຕມາດທີ I ທີ່ສິ້ນສຸດວັນທີ 31 ມີນາ 2024 ລ້ານກີບ	ສຳລັບໄລຍະສາມເດືອນຂອງໄຕມາດທີ I ທີ່ສິ້ນສຸດວັນທີ 31 ມີນາ 2023 ລ້ານກີບ
ຄ່າເບ້ຍປະກັນໃຫ້ກອງທຶນປົກປ້ອງຜູ້ຝາກເງິນ	27,619	19,991
ຄ່າສ້ອມແປງ ແລະ ຄ່າບຳລຸງຮັກສາ	8,075	6,218
ອຸປະກອນ ແລະ ເຄື່ອງໃຊ້ຫ້ອງການ	5,907	4,992
ຄ່າປະກັນໄພ	2,383	2,316
ຄ່າໂທລະຄົມມະນາຄົມ	2,559	2,648
ສາທາລະນຸປະໂພກ	3,182	2,108
ອື່ນໆ	45,120	12,954
	94,844	**51,227**

8. ກຳໄລຕໍ່ຮຸ້ນ

ການຄິດໄລ່ກຳໄລພື້ນຖານຕໍ່ຮຸ້ນໃນວັນທີ 31 ມີນາ 2024 ແລະ 2023 ແມ່ນອີງໃສ່ ກຳໄລທີ່ເປັນສ່ວນຂອງຜູ້ຖືຮຸ້ນສາມັນຂອງທະນາຄານໃນໄລຍະ ແລະ ຈຳນວນສະເລ່ຍຂອງຮຸ້ນສາມັນທີ່ຍັງເຫຼືອພາຍໃນໄລຍະດັ່ງຕໍ່ໄປນີ້:

	ສຳລັບໄລຍະສາມເດືອນຂອງໄຕມາດທີ I ທີ່ສິ້ນສຸດວັນທີ 31 ມີນາ 2024	ສຳລັບໄລຍະສາມເດືອນຂອງໄຕມາດທີ I ທີ່ສິ້ນສຸດວັນທີ 31 ມີນາ 2023
ກຳໄລ ສ່ວນຂອງຜູ້ຖືຮຸ້ນສາມັນຂອງບໍລິສັດ (ລ້ານກີບ)	110,183	126,194
ຈຳນວນສະເລ່ຍຂອງຮຸ້ນສາມັນສຳລັບກຳໄລພື້ນຖານຕໍ່ຮຸ້ນ (ຮຸ້ນ)	207,723,300	207,723,300
ກຳໄລຕໍ່ຮຸ້ນ (ກີບ)	530	608

ກຳໄລຈາກການດຳເນີນງານສຸດທິ ສຳລັບໄລຍະສາມເດືອນຂອງໄຕມາດທີ I ທີ່ສິ້ນສຸດ 31 ມີນາ 2024 ແມ່ນ 91,821 ລ້ານກີບ ເຮັດໃຫ້ມີກຳໄລພື້ນຖານ ຕໍ່ຮຸ້ນ 442 ກີບ ຕໍ່ຮຸ້ນ ແລະ ກຳໄລຈາກການດຳເນີນງານສຸດທິ ສຳລັບໄລຍະສາມເດືອນຂອງໄຕມາດທີ I ທີ່ສິ້ນສຸດ 31 ມີນາ 2023 ແມ່ນ 119,113 ລ້ານກີບ ເຮັດໃຫ້ມີຂາດທຶນພື້ນຖານຕໍ່ຮຸ້ນ 574 ກີບ ຕໍ່ຮຸ້ນ.

9. ເງິນຝາກຢູ່ທະນາຄານອື່ນ

	ກ່ອນການກວດສອບ 31 ມີນາ 2024 ລ້ານກີບ	ກວດສອບ 31 ທັນວາ 2023 ລ້ານກີບ
ເງິນຝາກກະແສລາຍວັນ ແລະ ເງິນຝາກປະຢັດ	**10,938,046**	**11,804,977**
- ເປັນເງິນກີບ	145	10,945
- ເປັນເງິນຕາຕ່າງປະເທດ	10,937,901	11,794,032
ເງິນຝາກມີກຳນົດ	**13,286,604**	**10,003,341**
- ເປັນເງິນກີບ	4,804,000	4,042,000
- ເປັນເງິນຕາຕ່າງປະເທດ	8,482,604	5,961,341
ດອກເບ້ຍຄ້າງຮັບ	**230,430**	**156,037**
	24,455,080	**21,964,355**

9. ເງິນຝາກຢູ່ທະນາຄານອື່ນ (ຕໍ່)

ອັດຕາດອກເບ້ຍສຳລັບເງິນຝາກຢູ່ທະນາຄານອື່ນພາຍໃນໄລຍະມີດັ່ງນີ້ :

	31 ມີນາ 2024 % ຕໍ່ປີ	31 ທັນວາ 2023 % ຕໍ່ປີ
ເງິນຝາກກະແສລາຍວັນ	0.07 - 1.20	0.15 - 1.20
ເງິນຝາກປະຢັດ	0.07 - 2.16	0.07 - 2.16
ເງິນຝາກມີກຳນົດ	3.50 – 7.50	0.15 - 7.70

10. ເງິນກູ້ໃຫ້ແກ່ລູກຄ້າ

	ກ່ອນການກວດສອບ 31 ມີນາ 2024 ລ້ານກີບ	ກວດສອບ 31 ທັນວາ 2023 ລ້ານກີບ
ເງິນກູ້ໃຫ້ແກ່ລູກຄ້າທັງໝົດ	49,939,979	52,198,063
ຫັກ: ເງິນແຮຂາດທຶນຈາກການເສື່ອມຄ່າ	(1,742,818)	(1,687,920)
ດອກເບ້ຍຄ້າງຮັບ	3,456,338	3,382,213
	51,653,500	**53,892,356**

ສ່ວນປ່ຽນແປງໃນເງິນແຮສຳລັບການຂາດທຶນຈາກການເສື່ອມຄ່າຂອງເງິນກູ້ໃຫ້ແກ່ລູກຄ້າ ພາຍໃນສາມເດືອນ ສິ້ນສຸດວັນທີ 31 ມີນາ 2024 ມີດັ່ງລຸ່ມນີ້:

	ລ້ານກີບ
ຍອດເຫຼືອ ໃນວັນທີ 1 ມັງກອນ 2024 – ກວດສອບ	**1,687,920**
ປ່ຽນແປງສຸດທິພາຍໃນໄລຍະ	772,992
ສະສາງໜີ້ຕ້ອງຮັບທອງຍາກ	(731,822)
ຜົນຕ່າງຈາກອັດຕາແລກປ່ຽນ	13,727
ຍອດເຫຼືອ ໃນວັນທີ 31 ມີນາ 2024 – ກ່ອນການກວດສອບ	**1,742,818**

ລາຍລະອຽດເງິນແຮສຳລັບການເສື່ອມຄ່າຂອງເງິນກູ້ໃຫ້ແກ່ລູກຄ້າ ໃນວັນທີ 31 ມີນາ 2024 ມີດັ່ງລຸ່ມນີ້:

	31 ມີນາ 2024		31 ທັນວາ 2023	
	ຍອດເຫຼືອທ້າຍ ລ້ານກີບ	ຄ່າເສື່ອມ ລ້ານກີບ	ຍອດເຫຼືອທ້າຍ ລ້ານກີບ	ຄ່າເສື່ອມ ລ້ານກີບ
ຄ່າເສື່ອມຈາກການປະເມີນເງິນກູ້ແບບດ່ຽວ	10,730,872	1,511,101	6,484,088	1,388,525
ຄ່າເສື່ອມຈາກການປະເມີນເງິນກູ້ແບບກຸ່ມ	39,209,107	231,717	45,713,975	299,395
	49,939,979	**1,742,818**	**52,198,063**	**1,687,920**

10. ເງິນກູ້ໃຫ້ແກ່ລູກຄ້າ (ຕໍ່)

ອັດຕາດອກເບ້ຍສຳລັບເງິນກູ້ທຸລະກິດພາຍໃນໄລຍະ ມີດັ່ງລຸ່ມນີ້:

	31 ມີນາ 2024 % ຕໍ່ປີ	31 ທັນວາ 2023 % ຕໍ່ປີ
ເງິນກູ້ເປັນເງິນ ກີບ	3.00 - 17.00	3.00 - 17.00
ເງິນກູ້ເປັນເງິນ ໂດລາ	5.80 - 16.00	5.80 - 16.00
ເງິນກູ້ເປັນເງິນ ບາດ	6.00 - 11.50	6.00 - 11.50

ເງິນກູ້ແບ່ງຕາມສະກຸນເງິນ:

	ກ່ອນການກວດສອບ 31 ມີນາ 2024 ລ້ານກີບ	ກວດສອບ 31 ທັນວາ 2023 ລ້ານກີບ
ເງິນກູ້ເປັນເງິນ ກີບ	18,133,032	17,840,433
ເງິນກູ້ເປັນເງິນ ໂດລາ	26,220,131	28,553,192
ເງິນກູ້ເປັນເງິນ ບາດ	5,586,816	5,804,438
	49,939,979	**52,198,063**

ເງິນກູ້ແບ່ງຕາມມື້ຄົບກຳນົດເດີມ:

	ກ່ອນການກວດສອບ 31 ມີນາ 2024 ລ້ານກີບ	ກວດສອບ 31 ທັນວາ 2023 ລ້ານກີບ
ເງິນກູ້ໄລຍະສັ້ນ	4,257,383	3,794,827
ເງິນກູ້ໄລຍະກາງ	34,130,630	34,227,684
ເງິນກູ້ໄລຍະຍາວ	11,551,966	14,175,552
	49,939,979	**52,198,063**

11. ການລົງທຶນທາງການເງິນ - ປະເພດມີໄວ້ເພື່ອຂາຍ

ທະນາຄານ ມີການລົງທຶນໃນຮຸ້ນຂອງບໍລິສັດ ຜະລິດ-ໄຟຟ້າລາວ ມະຫາຊົນ ແມ່ນບໍລິສັດທີ່ຈົດທະບຽນໃນຕະຫລາດຫຼັກຊັບລາວ ແລະ ໃນວັນທີ 31 ມີນາ 2024, ຮຸ້ນມີມູນຄ່າຍຸຕິທຳ ແມ່ນ 86,288 ລ້ານກີບ.

12. ການລົງທຶນທາງການເງິນ - ປະເພດຖືໄວ້ຈົນເຖິງວັນຄົບກຳນົດ

ການປ່ຽນແປງທີ່ມີສາລະສຳຄັນ ຂອງການລົງທຶນປະເພດຖືໄວ້ຈົນຄົບກຳນົດ ມີລາຍລະອຽດດັ່ງລຸ່ມນີ້

	(ປັບປຸງຄືນ) ລ້ານກີບ
ยอดเหลือ ในอันที่ 1 มังกอน 2024 - กอดสอบ	**14,865,690**
ເພີ່ມຂຶ້ນ	14,917,147
ວິທີຫຼຸດຕົ້ນທຶນທີ່ເກີດຂຶ້ນໃນໄລຍະ	8,961
ໄດ້ຮັບ	(5,500,000)
ยอดเหลือ ในอันที่ 31 มีนา 2024 - ก่อนการกอดสอบ	**24,291,798**

13. ການລົງທຶນໃນວິສາຫະກິດຂາຮຸ້ນ ແລະ ວິສາຫະກິດປະສົມ

ການປ່ຽນແປງທີ່ມີສາລະສຳຄັນ ຂອງເງິນລົງທຶນໃນວິສາຫະກິດຂາຮຸ້ນ ແລະ ວິສາຫະກິດປະສົມມີລາຍລະອຽດດັ່ງລຸ່ມນີ້:

	ລ້ານກີບ
ยอดเหลือ ในอันที่ 1 มังกอน 2024 – กอดสอบ	**747,223**
ສ່ວນແບ່ງກຳໄລ(ຂາດທຶນ)ໃນວິສາຫະກິດຂາຮຸ້ນ ແລະ ວິສາຫະກິດປະສົມ	18,362
ລົງທຶນເພີ່ມໃນວິສາຫະກິດຂາຮຸ້ນ ແລະ ວິສາຫະກິດປະສົມ	-
ຫັກ: ເງິນປັນຜົນໄດ້ຮັບໃນໄລຍະ	-
ยอดเหลือ ในอันที่ 31 มีนา 2024 - ก่อนการกอดสอบ	**765,585**

ເງິນລົງທຶນໃນວິສາຫະກິດຂາຮຸ້ນ ແລະ ວິສາຫະກິດປະສົມໃນວັນທີ 31 ມີນາ 2024, ມີດັ່ງນີ້:

	ອັດຕາສ່ວນການລົງທຶນ		ມູນຄ່າຕົ້ນທຶນ		ເງິນລົງທຶນວິທີສ່ວນໄດ້ເສຍ	
	31 ມີນາ 2024	31 ທັນວາ 2023	ก่อนการกอดสอบ 31 มีนา 2024	กอดสอบ 31 ทันวา 2023	ก่อนการกอดสอบ 31 มีนา 2024	กอดสอบ 31 ทันวา 2023
	(%)		ล้านกีบ			
ບໍລິສັດຫຼັກຊັບ ทดตล-ภท จຳກັດ	70	70	70,000	70,000	81,671	79,766
ทะนาถานธ่อมทุละกิดลาอ - ทอวด	25	25	197,839	197,839	271,918	268,770
ทะนาถาน ลาอ-ฝรั่ง จำกัด	30	30	138,000	138,000	180,903	175,985
ทะนาถาน ลาอ-จีน จำกัด	39.87	39.87	151,458	151,458	201,320	196,535
ບໍລິສັດ ປະກັນໄພລາວ-ທວງດ	35	35	9,168	9,168	17,675	16,453
ບໍລິສັດ ลาอเนิเซินม์ เพเม้น เน้ดเอิภ จำกัด	20	20	6,800	6,800	12,098	9,714
ลอม			**573,265**	**573,265**	**765,585**	**747,223**

14. ຊັບສິມບັດຄົງທີ່ ແລະ ອຸປະກອນ

ການເຄື່ອນໄຫວ ຂອງຊັບສິມບັດຄົງທີ່ ແລະ ອຸປະກອນ ສຳລັບໄລຍະ ມີດັ່ງຕໍ່ໄປນີ້:

	ລ້ານກີບ
ຍອດເຫຼືອ ໃນວັນທີ 1 ມັງກອນ 2024 - ກວດສອບ	**568,104**
ເພີ່ມຂຶ້ນ*	45,256
ໂອນໄປ ຊັບສິມບັດອື່ນໆ	4,145
ສະສາງ ⁄ ຂາຍ, ສຸດທິ	(5,161)
ຄ່າຫຼ້ຍຫ້ຽນ	(15,159)
ຍອດເຫຼືອ ໃນວັນທີ 31 ມີນາ 2024 - ກ່ອນການກວດສອບ	**597,185**

* ໃນໄລຍະນີ້, ການເພີ່ມຂຶ້ນສ່ວນຫຼາຍຂອງຊັບສິມບັດຄົງທີ່ ແລະ ອຸປະກອນ ແມ່ນຄື ເຊີເວີ, ອຸປະກອນສຳລັບໄອທີ ແລະ ເຄື່ອງຈັກນັບເງິນ ເປັນຕົ້ນ.

15. ຊັບສິມບັດຄົງທີ່ບໍ່ມີຕົວຕົນ

ການເຄື່ອນໄຫວ ຂອງຊັບສິມບັດຄົງທີ່ບໍ່ມີຕົວຕົນ ສຳລັບໄລຍະ ມີດັ່ງຕໍ່ໄປນີ້:

	ລ້ານກີບ
ຍອດເຫຼືອ ໃນວັນທີ 1 ມັງກອນ 2024 - ກວດສອບ	**321,734**
ເພີ່ມຂຶ້ນ	-
ຄ່າຫຼ້ຍຫ້ຽນ	4,910.36
ຍອດເຫຼືອ ໃນວັນທີ 31 ມີນາ 2024 - ກ່ອນການກວດສອບ	(3,340)
	323,304

16. ໜີ້ຕ້ອງສົ່ງທະນາຄານ ແລະ ສະຖາບັນການເງິນອື່ນໆ

	ກ່ອນການກວດສອບ 31 ມີນາ 2024 ລ້ານກີບ	ກວດສອບ 31 ທັນວາ 2023 ລ້ານກີບ
ເງິນຝາກກະແສລາຍວັນ	**9,687,747**	**8,136,564**
– ເປັນເງິນກີບ	3,574,357	2,551,312
– ເປັນເງິນຕາຕ່າງປະເທດ	6,113,389	5,585,252
ເງິນຝາກປະຢັດ	**375,830**	**400,852**
– ເປັນເງິນກີບ	225,715	154,784
– ເປັນເງິນຕາຕ່າງປະເທດ	150,115	246,068
ເງິນຝາກມີກຳນົດ	**1,134,851**	**881,074**
– ເປັນເງິນກີບ	201,545	201,536
– ເປັນເງິນຕາຕ່າງປະເທດ	933,306	679,538
ອື່ນໆ	**30,031**	**40,130**
– ເປັນເງິນກີບ	27,676	40,130
– ເປັນເງິນຕາຕ່າງປະເທດ	2,355	-
ດອກເບ້ຍຄ້າງຈ່າຍ	**5,040**	**4,497**
	11,233,498	**9,463,117**

16. ໜີ້ຕ້ອງສົ່ງທະນາຄານ ແລະ ສະຖາບັນການເງິນອື່ນໆ (ຕໍ່)

ອັດຕາດອກເບ້ຍສຳລັບເງິນຝາກໃຫ້ທະນາຄານ ແລະ ສະຖາບັນການເງິນອື່ນໃນໄລຍະມີດັ່ງລຸ່ມນີ້:

	31 ມີນາ 2024 % ຕໍ່ປີ	31 ທັນວາ 2023 % ຕໍ່ປີ
ເງິນຝາກກະແສລາຍວັນ	0.00 – 0.45	0.00 – 0.30
ເງິນຝາກປະຢັດ	ບໍ່ມີດອກເບ້ຍ	ບໍ່ມີດອກເບ້ຍ
ເງິນຝາກມີກຳນົດ	0.36 – 6.00	0.56 – 6.65

17. ໜີ້ຕ້ອງສົ່ງໃຫ້ລູກຄ້າ

	ກ່ອນການກວດສອບ 31 ມີນາ 2024 ລ້ານກີບ	ກວດສອບ 31 ທັນວາ 2023 ລ້ານກີບ
ເງິນຝາກກະແສລາຍວັນ	**16,859,320**	**16,773,450**
ເງິນຝາກກະແສລາຍວັນເປັນເງິນກີບ	5,390,865	4,990,191
ເງິນຝາກກະແສລາຍວັນເປັນເງິນຕາຕ່າງປະເທດ	11,468,455	11,783,259
ເງິນຝາກປະຢັດ	**67,926,690**	**59,829,971**
ເງິນຝາກປະຢັດເປັນເງິນກີບ	26,444,332	23,183,532
ເງິນຝາກປະຢັດເປັນເງິນຕາຕ່າງປະເທດ	41,482,359	36,646,439
ເງິນຝາກມີກຳນົດ	**32,658,520**	**31,394,673**
ເງິນຝາກມີກຳນົດເປັນເງິນກີບ	9,276,607	9,082,106
ເງິນຝາກມີກຳນົດເປັນເງິນຕາຕ່າງປະເທດ	23,381,913	22,312,567
ເງິນຝາກມັດຈຳ	**224,285**	**210,254**
ເງິນຝາກມັດຈຳເປັນເງິນກີບ	44,192	32,218
ເງິນຝາກມັດຈຳເປັນເງິນຕາຕ່າງປະເທດ	180,093	178,036
ໜີ້ຕ້ອງສົ່ງລູກຄ້າອື່ນໆ	**511,322**	**375,193**
ດອກເບ້ຍຄ້າງຈ່າຍ	**861,656**	**888,176**
	119,041,793	**109,471,717**

ເງິນຝາກປະຢັດຂອງລູກຄ້າ ລວມມີເປັນສະກຸນເງິນກີບ, ໂດລາ, ບາດ ແລະ ຢວນ ເຊິ່ງມີອັດຕາດອກເບ້ຍ ຕັ້ງແຕ່ 1.25% – 1.60%, 0.60% – 1.00%, 0.45% – 0.55% ແລະ 0.00% – 0.20% ຕໍ່ປີ ຕາມລຳດັບ.

ເງິນຝາກມີກຳນົດ ເປັນສະກຸນເງິນກີບ, ໂດລາ, ບາດ ແລະ ຢວນ ມີກຳນົດຕັ້ງແຕ່ 3, 6, 9, 12 ເດືອນ ແລະ ຫຼາຍກວ່າ 1 ປີ ເຊິ່ງມີອັດຕາດອກເບ້ຍ ຕັ້ງແຕ່ 3.16% – 7.00%, 1.35% – 7.75%, 1.10% – 7.55% ແລະ 1.00 – 1.30% ຕໍ່ປີ ຕາມລຳດັບ.

18. ເງິນກູ້ຢືມຈາກທະນາຄານອື່ນ

ການເຄື່ອນໄຫວຂອງເງິນກູ້ຢືມໄລຍະຍາວ ໃນວັນທີ 31 ມີນາ 2024 ມີດັ່ງລຸ່ມນີ້:

	ລ້ານກີບ
ຍອດເຫຼືອ ໃນວັນທີ 1 ມັງກອນ 2024 - ກວດສອບ	**4,320,170**
ເພີ່ມຂຶ້ນ	4,100
ຈ່າຍຄືນ	-
ຂາດທຶນຈາກອັດຕາແລກປ່ຽນ	112,558
ຍອດເຫຼືອ ໃນວັນທີ 31 ມີນາ 2024 - ກ່ອນການກວດສອບ	**4,436,828**

	ກ່ອນການກວດສອບ 31 ມີນາ 2024 ລ້ານກີບ	ກວດສອບ 31 ທັນວາ 2023 ລ້ານກີບ
ເງິນກູ້ຢືມຈາກທະນາຄານແຫ່ງ ສປປ ລາວ	4,374,568	4,257,910
ເງິນກູ້ຢືມຈາກທະນາຄານອື່ນ	62,260	62,260
ລວມ	**4,436,828**	**4,320,170**
ດອກເບ້ຍຄ້າງຈ່າຍ	**57,528**	**58,224**
	4,494,357	**4,378,394**

19. ທຶນຈົດທະບຽນ

ທຶນຈົດທະບຽນບໍ່ໄດ້ມີການປ່ຽນແປງເກີດຂຶ້ນໃນໄລຍະນີ້ສາມເດືອນຕົ້ນປີນີ້.

20. ຄັງສະສົມຕາມລະບຽບການ

ຄັງສະສົມຕາມລະບຽບການບໍ່ໄດ້ມີການປ່ຽນແປງເກີດຂຶ້ນໃນໄລຍະນີ້ສາມເດືອນຕົ້ນປີນີ້.

21. ລາຍລະອຽດເພີ່ມຕື່ມກ່ຽວກັບກະແສເງິນສົດ

ເງິນສົດ ແລະ ລາຍການທຽບເທົ່າເງິນສົດ ທີ່ລວມຢູ່ໃນໃບລາຍງານກະແສເງິນສົດ ປະກອບມີມູນຄ່າຂອງເອກະສານລາຍງານຖານະການເງິນ ດັ່ງລາຍລະອຽດລຸ່ມນີ້:

	ກ່ອນການກວດສອບ 31 ມີນາ 2024 ລ້ານກີບ	ກ່ອນການກວດສອບ 31 ມີນາ 2023 ລ້ານກີບ
ເງິນສົດ ແລະ ທຽບເທົ່າເງິນສົດໃນຄັງ	5,651,962	4,632,314
ເງິນຝາກກະແສລາຍວັນຢູ່ທະນາຄານແຫ່ງ ສປປ ລາວ	15,185,539	24,400,633
ເງິນຝາກກະແສລາຍວັນຢູ່ທະນາຄານອື່ນ	10,938,046	7,087,328
ເງິນຝາກມີກຳຫນົດ ທີ່ມີກຳຫນົດ 90 ວັນ	11,510,743	965,000
	43,286,289	**37,085,276**

22. ໜີ້ສິນທີ່ອາດເກີດຂຶ້ນ ແລະ ຂໍ້ຜູກພັນ

	31 ມີນາ 2024 ລ້ານກີບ	31 ທັນວາ 2023 ລ້ານກີບ
ວົງເງິນສິນເຊື່ອໃຫ້ແກ່ລູກຄ້າ (ii)	9,434,707	8,461,014
ໜັງສືຄ້ຳປະກັນທາງການເງິນ (i)	604,323	574,835
ໜັງສືສິນເຊື່ອກັບທີ່	1,029,333	1,241,528
ໜັງສືສິນເຊື່ອລໍຖ້າຊຳລະສະສາງ	108,926	51,348
	11,177,289	**10,328,725**

(i) ໜັງສືຄ້ຳປະກັນທາງການເງິນ

ໜັງສືສິນເຊື່ອ, ໜັງສືຄ້ຳປະກັນ (ລວມທັງໜັງສືສິນເຊື່ອເພື່ອຄ້ຳປະກັນ) ແລະ ໜັງສືໃດໜຶ່ງທີ່ເຮັດໃຫ້ທະນາຄານຕ້ອງເປັນຜູ້ຈ່າຍເງິນແທນລູກຄ້າໃນກໍລະນີທີ່ລູກຄ້າຜິດສັນຍາ, ໜັງສືຄ້ຳປະກັນ ແລະ ໜັງສືສິນເຊື່ອເພື່ອຄ້ຳປະກັນ ຖືວ່າມີຄວາມສ່ຽງຄ້າຍຄືກັບເງິນກູ້, ໜັງສືຄ້ຳປະກັນສາມາດເຮັດເປັນຮູບແບບໃນບິນແລກປ່ຽນ ຫຼື ໃນຮູບແບບໜັງສືສິນເຊື່ອບໍ່ສາມາດຖອນຄືນໄດ້, ໜັງສືຄ້ຳປະກັນເງິນລ່ວງໜ້າ ແລະ ໜັງສືຮັບຮອງໜີ້ຈາກບິນສ່ວນຫຼຸດ.

(ii) ວົງເງິນສິນເຊື່ອໃຫ້ແກ່ລູກຄ້າແລະທະນາຄານອື່ນ

ບັນດາຂໍ້ຜູກພັນສຳລັບຕໍ່ອາຍຸສັນຍາສິນເຊື່ອແມ່ນມີໄວ້ສຳລັບເງິນກູ້ ແລະ ເງິນກູ້ໝຸນວຽນ. ຂໍ້ຜູກພັນໂດຍທົ່ວໄປມີມື້ຄົບກຳນົດທີ່ໄດ້ກຳນົດໄວ້, ຫຼື ສາເຫດຂອງການຢຸດຕິສັນຍາອື່ນໆ. ດັ່ງນັ້ນ, ຂໍ້ຜູກພັນອາດຈະໝົດກຳນົດໂດຍທີ່ຍັງບໍ່ຖືກຖອນ, ມູນຄ່າໃນສັນຍາທັງໝົດບໍ່ຈຳເປັນຕ້ອງສະແດງເຖິງຄວາມຕ້ອງການເງິນສົດໃນອະນາຄົດ.

ເຖິງຢ່າງໃດກໍຕາມ, ໂອກາດຄ່າເສື່ອມໜີ້ເສຍຈະເກີດຂຶ້ນ ແມ່ນຕ່ຳກວ່າມູນຄ່າທັງໝົດ ຂອງບັນດາຂໍ້ຜູກພັນທີ່ຍັງບໍ່ໄດ້ຖືກນຳໃຊ້ ເນື່ອງຈາກວ່າ, ຂໍ້ຜູກພັນໃນການຕໍ່ອາຍຸສິນເຊື່ອ ຂຶ້ນຢູ່ກັບລູກຄ້າສາມາດຮັກສາມາດຕະຖານສະເພາະ ທີ່ໄດ້ກຳນົດໄວ້. ທະນາຄານຕິດຕາມມື້ຄົບກຳນົດຂອງຂໍ້ຜູກພັນສິນເຊື່ອ, ເພາະວ່າຂໍ້ຜູກພັນທີ່ມີອາຍຸສັນຍາໄລຍະຍາວກວ່າ ແມ່ນມີຄວາມສ່ຽງຫຼາຍກວ່າຂໍ້ຜູກພັນທີ່ມີອາຍຸສັນຍາສັ້ນ.

23. ບັນດາລາຍການເຄື່ອນໄຫວກັບພາກສ່ວນທີ່ກ່ຽວຂ້ອງ

ກ) ຜູ້ຖືຮຸ້ນໃຫຍ່ຂອງທະນາຄານ ແມ່ນ ລັດຖະບານລາວ ຖືຮຸ້ນ 60% ຂອງຮຸ້ນທັງໝົດຂອງທະນາຄານ. ຮຸ້ນສ່ວນທີ່ເຫຼືອຂອງທະນາຄານ ແມ່ນຖືໂດຍນັກລົງທຶນທົ່ວໄປ.

ຂໍ້ມູນຂອງທະນາຄານ ໃນສ່ວນຂອງເງິນລົງທຶນໃນວິສາຫະກິດຂາຮຸ້ນ ແລະ ວິສາຫະກິດປະສົມແມ່ນ ໄດ້ເປີດເຜີຍຢູ່ບົດອະທິບາຍຂໍ້ທີ 13.

ຂ) ລາຍການເຄື່ອນໄຫວທີ່ເປັນສາລະສຳຄັນກັບພາກສ່ວນທີ່ກ່ຽວຂ້ອງ ໃນວັນທີ 31 ມີນາ 2024 ມີດັ່ງລຸ່ມນີ້:

	31 ມີນາ 2024 ລ້ານກີບ	31 ມີນາ 2023 ລ້ານກີບ
ລາຍຮັບດອກເບ້ຍ ແລະ ອື່ນໆ		
ບໍລິສັດແມ່	230,454	71,498
ລາຍຈ່າຍດອກເບ້ຍ ແລະ ອື່ນໆ		
ພາກສ່ວນທີ່ກ່ຽວຂ້ອງ	(56,758)	(46,619)

23. ບັນດາລາຍການເຄື່ອນໄຫວກັບພາກສ່ວນທີ່ກ່ຽວຂ້ອງ (ຕໍ່)

ລາຍການເຄື່ອນໄຫວ ກັບສະພາບໍລິຫານຂອງທະນາຄານ

ຄ) ຜົນປະໂຫຍດໃຫ້ແກ່ສະພາບໍລິຫານ ແລະ ຄະນະອຳນວຍການ ແມ່ນມີລາຍລະອຽດດັ່ງລຸ່ມນີ້:

	31 ມີນາ 2024 ລ້ານກີບ	31 ມີນາ 2023 ລ້ານກີບ
ເງິນເດືອນ	521	508
ເງິນບຳເນັດ	131	-
ເງິນອຸດໜູນຕຳແໜ່ງ	260	239
	912	**747**

ງ) ຍອດຄົງເຫຼືອທີ່ເກີດຈາກ ລາຍຮັບດອກເບ້ຍ. ລາຍຈ່າຍດອກເບ້ຍ ແລະ ອື່ນໆ
ຍອດຄົງເຫຼືອ ໃນໄລຍະລາຍງານ ຂອງລາຍການຂອງພາກສ່ວນທີ່ກ່ຽວຂ້ອງ ມີດັ່ງຕໍ່ໄປນີ້:

	31 ມີນາ 2024 ລ້ານກີບ	31 ທັນວາ 2023 ລ້ານກີບ
ໜີ້ຕ້ອງຮັບ		
ບໍລິສັດແມ່	24,608,936	15,025,830
ວິສາຫະກິດຂາຮຸ້ນ ແລະ ວິສາຫະກິດປະສົມ	1,162,382	1,479,757
ພາກສ່ວນທີ່ກ່ຽວຂ້ອງ	27,877,162	26,473,405
ໜີ້ຕ້ອງສົ່ງ		
ວິສາຫະກິດຂາຮຸ້ນ ແລະ ວິສາຫະກິດປະສົມ	612,920	2,146,492
ພາກສ່ວນທີ່ກ່ຽວຂ້ອງ	4,432,097	4,316,134